© 2005 GFA Consulting Group.  All rights reserved.

# *GmbH ກຸ່ມບໍລິສັດທີ່ປຶກສາ GFA*

*- ການຢັ້ງຢືນ GFA -*

# ***ມາດຕະຖານຊົ່ວຄາວ***
# ***ສໍາລັບເຈົ້າໜ້າທີ່ປ່າໄມ້***
# ***ຢູ່ໃນ ສປປ ລາວ***

*ສະບັບທີ 1.0 ວັນທີ: 10.12.2010*

*- ຢູ່ໃນຊ່ວງສືບຕໍ່ປັບປຸງ -*

*ໝາຍເຫດ:*

*ບັນດາມາດຕະຖານເຫຼົ່ານີ້ ໄດ້ຮັບການພັດທະນາຂຶ້ນດ້ວຍການຮ່ວມມືຢ່າງໃກ້ຊິດກັບຜູ້ຕາງໜ້າທີ່ມາຈາກ ອົງການກໍາມະບານ, ວິທະຍາສາດສັງຄົມ, ວິທະຍາສາດປ່າໄມ້, ການວາງແຜນປ່າໄມ້, ການລ່າສັດ, ເສດຖະກິດກະສິກໍາ ແລະນິເວດວິທະຍາ. ສ່ວນໃຫຍ່ແມ່ນໄດ້ອີງໃສ່ບັນດາຫຼັກການ ແລະມາດຖານຂອງ FSC. ນອກຈາກນັ້ນ, ໃນບ່ອນທີ່ເປັນໄປໄດ້, ພວກມັນກວມລວມເອົາແນວຄວາມຄິດ ຫຼືບາງພາກຂອງ ບັນດາເອກະສານ ແລະພັດທະນາການດັ່ງຕໍ່ໄປນີ້ຄື:*
*ຄໍາແນະນໍາຂອງ ITTO, ຜົນໄດ້ຮັບຂອງກອງປະຊຸມ UNCED ຢູ່ທີ່ຣິໂອ, ມາດຖານ ແລະບົດແນະນໍາ ລະດັບປະຕິບັດການຂອງກອງປະຊຸມລັດຖະມົນຕີ ກ່ຽວກັບການປົກປ້ອງປ່າໄມ້ຢູ່ໃນເອີຣົບທີ່ໄດ້ຈັດຂຶ້ນຢູ່ທີ່ ເຮລຊິນກິ (Helsinki) ແລະລິສບອນ (Lisbon), ແລະຄໍາເຫັນແນະນໍາທາງດ້ານສັງຄົມ ແລະສິ່ງແວດລ້ອມທີ່ທາງ NGOs ສາກົນເປັນຜູ້ເຮັດຂຶ້ນມາ.*

© 2005 GFA Consulting Group.  All rights reserved.

# ບົດນຳ

ການຄຸ້ມຄອງປ່າໄມ້ທີ່ມີຄວາມຮັບຜິດຊອບ (ອີງໃສ່ສະພາບຄວາມຮູ້ໃນປະຈຸບັນ) ປະກອບໄປດ້ວຍມາດຕະການປົກປ້ອງ, ດູແລຮັກສາ ແລະນຳໃຊ້ປ່າໄມ້ໂດຍທາງກົງ ແລະທາງອ້ອມເຫຼົ່ານັ້ນທັງໝົດ ທີ່ເປັນການຮັບປະກັນເລື່ອງການອະນຸລັກພວກມັນຢ່າງຖາວອນ. ການຄຸ້ມຄອງປ່າໄມ້ທີ່ມີຄວາມຮັບຜິດຊອບເປັນການຮັກສາຄວາມຍືດຫຍຸ່ນ ແລະຄວາມຫຼາກຫຼາຍທາງທຳມະຊາດຂອງຮູບແບບຊີວິດຕ່າງໆທີ່ສາມາດເຮັດໃຫ້ປ່າໄມ້ຄ່ອຍປ່ຽນແປງໄປ ແລະໃຫ້ຜົນປະໂຫຍດກັບມະນຸດຜ່ານການດຳເນີນໜ້າທີ່ທາງດ້ານນິເວດວິທະຍາ, ເສດຖະກິດ, ສັງຄົມ ແລະວັດທະນະທຳຂອງເຂົາເຈົ້າຕະຫຼອດໄປ.

ການຍັ້ງຍືນການຄຸ້ມຄອງປ່າໄມ້ໝາຍເຖິງການປະເມີນຜົນຄຸນະພາບຂອງການຄຸ້ມຄອງປ່າໄມ້ຕົວຈິງທາງດ້ານຄວາມຮັບຜິດຊອບຕໍ່ເສດຖະກິດ, ສັງຄົມ ແລະສິ່ງແວດລ້ອມ ແລະການປະເມີນທຽບກັບມາດຕະຖານທີ່ໄດ້ກຳນົດ ແລະຮັບຮອງ.

ດັ່ງນັ້ນ, ສິ່ງຈຳເປັນທີ່ຕ້ອງໄດ້ເຮັດກ່ອນການປະເມີນຜົນຄຸນະພາບຂອງການຄຸ້ມຄອງປ່າໄມ້ແມ່ນການມີມາດຕະຖານທີ່ໃຊ້ເປັນພື້ນຖານ ແລະເຄື່ອງມືເພື່ອການປຽບທຽບການມີຂະບວນການມາດຕະຖານຢູ່ເພື່ອປະຕິບັດການປະເມີນຜົນ. ຂະບວນການແມ່ນຈະຕ້ອງເປັນໄປຕາມຄວາມເປັນຈິງ ແລະໂປ່ງໃສເທົ່າທີ່ຈະເປັນໄປໄດ້.

ການຕັດສິນເລື່ອງມາດຖານຂອງການປະເມີນສຳລັບປ່າທີ່ໄດ້ຮັບການຄຸ້ມຄອງດີນັ້ນແມ່ນເປັນສິ່ງສຳຄັນ. ມາດຖານທົ່ວໆໄປແມ່ນຢ່າງໜ້ອຍຈະຕ້ອງຖືກປັບໃຫ້ເຂົ້າພື້ນທີ່ປ່າໄມ້ໃຫຍ່ຕ່າງໆຢູ່ໃນເຂດເສັ້ນຂະໜານເຂດຮ້ອນຊຸ່ມ, ເຂດໜາວ ແລະທາງຂົ້ວໂລກເໜືອ. ບັນດາມາດຖານແມ່ນມີຄວາມຈຳເປັນຕ້ອງໄດ້ຮັບການເພີ່ມຕົວວັດແທກທາງດ້ານປະລິມານ ແລະຄຸນະພາບທີ່ສາມາດພິສູດໄດ້ນັ້ນໃສ່ຕື່ມ, ເຊິ່ງຈຳເປັນຈະຕ້ອງໄດ້ຮັບການກຳນົດຢູ່ໃນລະດັບພາກພື້ນ ແລະທ້ອງຖິ່ນ. ຕົວວັດແທກເຫຼົ່ານີ້ແມ່ນຈະໄດ້ຖືກລວບລວມເຂົ້າຢູ່ໃນບັນຊີກວດກາສະເພາະຂອງແຕ່ລະປະເທດ ເພື່ອອຳນວຍຄວາມສະດວກການກວດກາຢູ່ໃນຫ້ອງການ ແລະການກວດກາພາກສະໜາມ.

ການປະເມີນການຄຸ້ມຄອງປ່າໄມ້ທີ່ມີຄວາມຮັບຜິດຊອບຄົບຖ້ວນຕ້ອງເອົາໃຈໃສ່ສະພາບກອບວຽກສະເພາະຂອງປະເທດໃນລະດັບປະເທດ ແລະລະດັບບໍລິຫານອື່ນໆ.

ສະຖານະການໃນແຕ່ລະລະດັບມີຜົນກະທົບຕໍ່ຄວາມເປັນໄປໄດ້ຂອງການຄຸ້ມຄອງປ່າໄມ້ທີ່ໄດ້ມີກົດລະບຽບກຳນົດ. ຄວນຈະມີຄວາມສະໝໍ່າສະເໝີ ແລະຄວາມໂປ່ງໃສໃນການສະແດງອອກຢູ່ໃນເງື່ອນໄຂທາງດ້ານການເມືອງ, ການບໍລິຫານ, ເສດຖະກິດ, ນິເວດວິທະຍາ, ສັງຄົມ ແລະວັດທະນະທຳຢູ່ພາຍໃນສະພາບທີ່ໜ່ວຍງານຄຸ້ມຄອງປ່າໄມ້ດຳເນີນການ. ການປະເມີນຜົນການຄຸ້ມຄອງປ່າໄມ້ຄວນຈະເອົາໃຈໃສ່ສະພາບການໃນທຸກລະດັບຕັ້ງແຕ່ລະດັບສາກົນລົງຈົນຮອດລະດັບດຳເນີນການ. ເຖິງແນວໃດກໍ່ຕາມ, ການຕັດສິນໃຈໃຫ້ກັບ ຫຼືຕໍ່ກັບການຍັ້ງຍືນທັງໝົດນັ້ນແມ່ນໄດ້ອີງໃສ່ສິ່ງທີ່ພົບເຫັນຢູ່ໃນລະດັບການດຳເນີນການ.

© 2005 GFA Consulting Group.  All rights reserved.

*ຈຸດສຸມຂອງການປະເມີນຜົນທາງດ້ານຄຸນະພາບຂອງການຄຸ້ມຄອງປ່າໄມ້ແມ່ນຄວນຈະຢູ່ໃນການຄຸ້ມຄອງປ່າໄມ້ ນັ້ນຄືລະດັບປະຕິບັດການ. ຢູ່ໃນລະດັບນີ້, ນະໂຍບາຍປ່າໄມ້ ແລະບົດແນະນຳທາງດ້ານການບໍລິຫານຕ້ອງໄດ້ເອົາປະສົມປະສານເຂົ້າສູ່ການຄຸ້ມຄອງປ່າໄມ້ໃນທາງປະຕິບັດ.*

*ການປະເມີນການຄຸ້ມຄອງປ່າໄມ້ໃນລະດັບປະຕິບັດການແມ່ນພິຈາລະນາໃນ 5 ດ້ານດັ່ງຕໍ່ໄປນີ້ຄື:*

- *ດ້ານກົດໝາຍ, ການເມືອງ ແລະການບໍລິຫານ*
- *ດ້ານວິຊາການໃນການວາງແຜນ ແລະການຈັດຕັ້ງປະຕິບັດ*
- *ດ້ານເສດຖະກິດ*
- *ດ້ານສັງຄົມ ແລະວັດທະນະທຳ*
- *ດ້ານນິເວດວິທະຍາ*

*ການກວດກາພາກສະໜາມຄວນກຳນົດຄວາມພຽງພໍໃນກົນໄກການວາງແຜນການ, ການຈັດຕັ້ງປະຕິບັດ ແລະການຄວບຄຸມທີ່ມີຢູ່ເພື່ອນຳເອົາການຄຸ້ມຄອງປ່າໄມ້ໄປສູ່ຄວາມຍືນຍົງ. ການກວດການີ້ຄວນຈະກວດກາ ແລະປະເມີນຜົນການປະຕິບັດການຄຸ້ມຄອງ ເຊິ່ງມີຜົນກະທົບຕໍ່ກັບຂົງເຂດ ແລະໂຄງສ້າງຂອງໄມ້ຢືນຕົ້ນ, ວິທີການຂຸດຄົ້ນໄມ້ ແລະການຂົນສົ່ງໄມ້ທ່ອນ, ເຊັ່ນດຽວກັບສະພາບການຮັກສາໄມ້ຢືນຕົ້ນ - ນິເວດວິທະຍາຂອງປ່າຫຼັງຈາກການຂຸດຄົ້ນ.*

*ມາດຖານຕໍ່ໄປນີ້ໄດ້ຮັບການກະກຽມເພື່ອເຮັດໃຫ້ມີການປັບຕົວເຂົ້າກັບສະພາບຂອງທ້ອງຖິ່ນ ໃນຂະນະທີ່ຍັງຮັກສາໃຫ້ມີຄວາມສາມາດນຳໃຊ້ໄດ້ກັບສະພາບຂອງປ່າໃນລະດັບກ້ວາງຂວາງ. ບັນດາມາດຕະຖານທີ່ຖືວ່າມີໄດ້ແກ່ (i) ເຈົ້າຂອງປ່າ, (ii) ອຳນາດຕາມບັນທັດຖານ, (iii) ຜູ້ຈັດການປ່າ. ສິ່ງເຫຼົ່ານີ້ແມ່ນຈະຖືກສະແດງອອກຕາມລຳດັບຢູ່ໃນຫຼາຍໆປະເທດເຊັ່ນ: ເປັນປະເທດ (ເຊິ່ງລັດຖະບານເປັນຕົວແທນ), ການບໍລິການປ່າໃນລະດັບຊາດ, ແລະບໍລິສັດຄຸ້ມຄອງ, ຜູ້ໄດ້ຮັບການອະນຸຍາດ ຫຼືຜູ້ໄດ້ຮັບການສຳປະທານ. ເຖິງແນວໃດກໍ່ຕາມ, ຜູ້ເປັນເຈົ້າຂອງທີ່ໄດ້ຮັບການຮັບຮອງຕາມກົດໝາຍອາດຈະຍັງມີອຳນາດການປົກຄອງໃນຂັ້ນນະຄອນ ຫຼືຊຸມຊົນທ້ອງຖິ່ນ, ໃນຂະນະທີ່ຜູ້ຈັດການປ່າໄມ້ອາດຈະເປັນໜ່ວຍງານບໍລິການປ່າໄມ້ເອງ ຫຼືບໍລິສັດພາກເອກະຊົນສະເພາະ ຫຼືອົງການຈັດຕັ້ງທີ່ບໍ່ເປັນຂອງລັດຖະບານສ້າງປະໂຫຍດໃຫ້ກັບສັງຄົມ.*

***<u>ນິຍາມ</u>:***

***ມາດຕະຖານ:*** *ນິຍາມທົ່ວໄປ: ຂໍ້ຕົກລົງທາງດ້ານເອກະສານທີ່ມີມາດຖານດ້ານເຕັກນິກ ຫຼືມາດຖານທີ່ແນ່ນອນອື່ນໆທີ່ຈະຖືກນຳໃຊ້ໂດຍບໍ່ມີການປ່ຽນແປງເປັນກົດລະບຽບ, ບົດແນະນຳ ຫຼືຄຳນິຍາມຂອງຄຸນລັກສະນະ ເພື່ອຮັບປະກັນວ່າວັດສະດຸ, ຜະລິດຕະພັນ, ຂະບວນການ ແລະການບໍລິການນັ້ນມີຄວາມເໝາະສົມຕໍ່ກັບຈຸດປະສົງຂອງພວກມັນ [Upton ແລະ Bass]. ຕາມທີ່ໄດ້ນຳມາໃຊ້ກັບປ່າໄມ້ຄື: ບັນທັດຖານ ຫຼືຂັ້ນຕອນດຳເນີນການ, ຕົວຢ່າງ ຕາມທີ່ໜ່ວຍງານເຮັດການຢັ້ງຢືນນຳໃຊ້ຢູ່ໃນການປະເມີນຜົນການຈັດຕັ້ງປະຕິບັດຂອງເຂົາເຈົ້າທີ່ເຮັດໂດຍທາງຜູ້ສະໝັກທາງດ້ານມາດຕະຖານເຈົ້າໜ້າທີ່ປ່າໄມ້ ຫຼືຕ່ອງໂສ້ຂອງຂະບວນການຄຸ້ມຄອງດູແລຮັກສາ.*

© 2005 GFA Consulting Group.  All rights reserved.

***ຫຼັກການ:*** *ກົດລະບຽບທີ່ຈຳເປັນ ຫຼືອົງປະກອບຂອງເຈົ້າໜ້າທີ່ປ່າໄມ້ (ຢູ່ໃນເນື້ອໃນຂອງການຢັ້ງຢືນ FSC).*

***ມາດຖານ****: ລະດັບຂອງເງື່ອນໄຂ ຫຼືຂະບວນການທີ່ທາງການຄຸ້ມຄອງປ່າໄມ້ມີຄວາມຮັບຜິດຊອບສາມາດໄດ້ຮັບການປະເມີນ: ມາດຖານແມ່ນໄດ້ຮັບການຈຳແນກໂດຍຊຸດຕົວຊີ້ບອກທີ່ກ່ຽວຂ້ອງທີ່ໄດ້ຮັບການຕິດຕາມເປັນໄລຍະ ເພື່ອປະເມີນການປ່ຽນແປງ [ຂະບວນການ Montreal]; ວິທີການຕັດສິນວ່າຫຼັກການ (ກ່ຽວກັບການຄຸ້ມຄອງປ່າໄມ້) ໄດ້ຮັບການປະຕິບັດຕາມຄົບຖ້ວນຫຼືບໍ່ [ສະບັບທີ່ຜ່ານການຮັບຮອງໂດຍຄະນະກຳມະການ FSC ໃນຫຼັກການຂໍ້ທີ 10: ການປູກໄມ້].*

***ຕົວຊີ້ບອກ****: ຕົວແປທີ່ສາມາດວັດແທກໄດ້ໂດຍທາງກົງ ຫຼືທາງອ້ອມນຳໃຊ້ເພື່ອລາຍງານສະຖານະພາບ ຫຼືແນວໂນ້ມຂອງມາດຖານ; ແຕກຕ່າງຈາກຈຸດປະສົງ [ດັດປັບມາຈາກກອງປ່າໄມ້ການາດາ, ແຜ່ນພັບໂຄສະນາ C&I]; ມາດຕະການ (ການວັດແທກ) ມາດຖານດ້ານໜຶ່ງຄື: ຕົວແປດ້ານປະລິມານ ຫຼືຄຸນະພາບ ເຊິ່ງສາມາດວັດແທກໄດ້ ຫຼືອະທິບາຍໄດ້ ແລະເຊິ່ງເມື່ອໄດ້ຮັບການສັງເກດເບິ່ງເປັນໄລຍະແລ້ວແມ່ນສາມາດຊີ້ໃຫ້ເຫັນແນວໂນ້ມໄດ້ [ຂະບວນການ Montreal].*

© 2005 GFA Consulting Group.  All rights reserved.

**ຫຼັກການ #1: ຄວາມສອດຄ່ອງກັບລະບຽບກົກໝາຍ ແລະ ຫຼັກການຂອງສະພາບບໍລິຫານປ່າໄມ້**

**ການຄຸ້ມຄອງຈັດສັນປ່າໄມ້ ຕ້ອງນັບຖືທຸກລະບຽບກົດໝາຍຂອງປະເທດ ທີ່ດຳເນີນການຄຸ້ມຄອງ, ສົນທິສັນຍາ ແລະ ຂໍ້ຕົກລົງສາກົນ ທີ່ປະເທດດັ່ງກ່າວໄດ້ໃຫ້ສັດຕະຍາບັນ, ພ້ອມທັງດຽວກັນກໍຕ້ອງ ສອດຄ່ອງກັບຫຼັກການ ແລະ ມາດຕະຖານຂອງສະພາບບໍລິຫານປ່າໄມ້ ນຳດ້ວຍ.**

***ມາດຖານ*** 1.1 ການຄຸ້ມຄອງຈັດສັນປ່າໄມ້ ຕ້ອງນັບຖືທຸກລະບຽບການ ແລະ ຫຼັກການບໍລິຫານ ຈະແມ່ນລະດັບຊາດ ແລະ ລະດັບທ້ອງຖິ່ນກໍຕາມ

*ຕົວຊີ້ບອກ:*

***1.1.1*** *ບໍ່ມີຫຼັກຖານຂອງການບໍ່ປະຕິບັດຕາມກົດໝາຍແຫ່ງຊາດ ແລະກົດໝາຍທ້ອງຖິ່ນ ແລະຄວາມຕ້ອງການທາງດ້ານການບໍລິຫານທີ່ສາມາດນຳໃຊ້ໄດ້ທັງໝົດ.*

***1.1.2*** *ບຸກຄົນຮັບຜິດຊອບສະແດງໃຫ້ເຫັນຄວາມຮູ້ທາງດ້ານກົດໝາຍ ທີ່ເຂົາເຈົ້າໃຊ້ ພ້ອມກັບກົດໝາຍການປະຕິບັດ , ບົດແນະນຳ ຫຼືຂໍ້ຕົກລົງທີ່ກ່ຽວຂ້ອງ.*

***1.1.3*** *ຄວາມບໍ່ສອດຄ້ອງຕາມກົດໝາຍ ຫຼືບົດແນະນຳແມ່ນໄດ້ຮັບການບັນທຶກໄວ້ ແລະແຜນການຮອງຮັບໄດ້ຮັບການສ້າງຂື້ນ (ໃຊ້ບໍ່ໄດ້ກັບການປະຕິບັດງານຂອງ **SLIMF**).*

***ມາດຖານ*** 1.2 ຈະຕ້ອງຈ່າຍຄ່າທຳນຽມ, ຄ່າລິຂະສິດ, ຄ່າພາສີ, ແລະຄ່າໃຊ້ຈ່າຍທັງໝົດ ແລະຄ່າອື່ນໆຕາມກົດໝາຍ.

*ຕົວຊີ້ບອກ:*

***1.2.1*** *ມີຫຼັກຖານການຈ່າຍທຳນຽມ, ຄ່າອື່ນໆທີ່ຕ້ອງການທັງໝົດນັ້ນໂດຍການດຳເນີນງານປ່າໄມ້.*

***ມາດຖານ*** 1.3 ຕ້ອງນັບຖື ທຸກໆກົດໝາຍ ແລະ ຂໍ້ຕົກລົງທາງສາກົນທີ່ລັດຖະບານໄດ້ໃຫ້ສັດຕະຍາບັນເປັນຕົ້ນແມ່ນ ສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍ ດ້ານຊີວະນາໆພັນ, CITES, ອະນຸສັນຍາແຮງງານສາກົນ (ILO), ITTA

*ຕົວຊີ້ບອກ:*

***1.3.1*** *ຜູ້ຈັດການປ່າໄມ້ເຄົາລົບບັນດາຂໍ້ບັນຍັດຂອງ CITIES, ITTA ແລະສົນທິສັນຍາຊີວະນາໆພັນ.*

***1.3.2*** *ຜູ້ຈັດການປ່າໄມ້ເຄົາລົບຕໍ່ບັນດາຂໍ້ບັນຍັດ ILO ທີ່ເໝາະສົມຕໍ່ກັບພາກພື້ນຂອງເຂົາເຈົ້າ. ການຈັດຕັ້ງປະຕິບັດສົນທິສັນຍາ ILO ຕໍ່ໄປນີ້ແມ່ນເປັນຄວາມຮຽກຮ້ອງຕ້ອງການຕ່ຳສຸດສຳລັບການຍັ້ງຢືນຄື: 29, 87, 97, 98, 100, 105, 111, 131, 138, 141, 142, 143, 155, 169, 182, ກົດລະບຽບການປະພຶດຂອງ ILO ກ່ຽວກັບຄວາມປອດໄພ ແລະສຸຂະພາບຢູ່ໃນວຽກປ່າໄມ້, ຂໍ້ຄຳເຫັນແນະນຳ 135, ຄຳເຫັນແນະນຳການແກ້ໄຂຄ່າຈ້າງຕ່ຳສຸດ, 1970 (**SLIMF**: ຜູ້ຈັດການປ່າໄມ້ເອົາໃຈໃສ່ ແລະໄດ້ດຳເນີນການຄວບຄຸມເພື່ອຮັບປະກັນການສືບຕໍ່ການປະຕິບັດຕາມກົດໝາຍແຫ່ງຊາດກ່ຽວຂ້ອງກັບເລື່ອງແຮງງານ).*

***ມາດຖານ*** 1.4 ຂໍ້ຂັດແຍ້ງລະຫວ່າງກົດໝາຍ, ລະບຽບການ ແລະ ຫຼັກການ ແລະ ມາດຕະຖານຂອງ ສະພາບບໍລິຫານ ປ່າໄມ້ຕ້ອງໄດ້ຮັບການປະເມີນໂດຍຜູ້ຍັ້ງຢືນ ແລະ ຝ່າຍທີ່ກ່ຽວຂ້ອງ ຫຼື ຝ່າຍທີ່ຖືກຜົນກະທົບ ເພື່ອຈຸດປະສົງຂອງການຍັ້ງຢືນ ຕາມແຕ່ລະກໍລະນີ.

© 2005 GFA Consulting Group.  All rights reserved.

*ຕົວຊີ້ບອກ:*

**1.4.1** *ຄວາມຂັດກັນລະຫວ່າງກົດໝາຍ, ກົດລະບຽບ ແລະຫຼັກການ FSC ແລະມາດຖານໄດ້ຮັບການບັນທຶກ ແລະ ໄດ້ລາຍງານໃຫ້ກັບໜ່ວຍງານເຮັດການຍັ້ງຢືນ.*

**1.4.2** *ມີຫຼັກການທີ່ທາງ FME ໄດ້ພະຍາຍາມຢ່າງຕັ້ງໜ້າເພື່ອແກ້ໄຂຂໍ້ຂັດແຍ້ງທີ່ໄດ້ລະບຸ.*

***ມາດຖານ* 1.5** *ພື້ນທີ່ການຄຸ້ມຄອງປ່າໄມ້ຄວນໄດ້ຮັບການປົກປ້ອງຈາກການຂຸດຄົ້ນ, ການຕັ້ງຖິ່ນຖານທີ່ຜິດກົດໝາຍ ແລະກິດຈະກຳທີ່ບໍ່ໄດ້ຮັບອະນຸຍາດອື່ນໆ.*

*ຕົວຊີ້ບອກ:*

**1.5.1** ***ມີ****ລະບົບເພື່ອກຳນົດ ແລະຕິດຕາມກິດຈະກຳທີ່ຜິດກົດໝາຍ ແລະບໍ່ໄດ້ຮັບອະນຸຍາດ ແລະມັນໄດ້ຮັບການຈັດຕັ້ງປະຕິບັດ.*

**1.5.2** ***ມີ****ມາດຕະການ (ຕົວຢ່າງ ປ້າຍ, ບຸກຄະລາກອນພິເສດ) ເພື່ອຫຼີກເວັ້ນການເກີດມີກິດຈະກຳທີ່ບໍ່ໄດ້ອະນຸຍາດ ແລະມັນໄດ້ຮັບການຈັດຕັ້ງປະຕິບັດ.*

**1.5.3** *ໃນບ່ອນທີ່ມີຄວາມເໝາະສົມ, ຜູ້ຈັດການປ່າໄມ້ຄວນໃຫ້ຄວາມຮ່ວມມືຢ່າງຕັ້ງໜ້າກັບອຳນາດການປົກຄອງທ້ອງຖິ່ນ ເພື່ອຊ່ວຍເຫຼືອພະນັກງານເພື່ອຮັບປະກັນເລື່ອງດິນທີ່ຢູ່ອາໃສ.*

***ມາດຖານ*** 1.6 ຜູ້ຄຸ້ມຄອງປ່າໄມ້ຕ້ອງໄດ້ສະອດງໃຫ້ເຫັນເຖິງຮູບການຄຸ້ມຄອງປ່າໄມ້ໃນໄລຍະຍາວ ທີ່ຕິດແໜ້ນ ກັບມາດຖານ ແລະ ຫຼັກການຂອງ FSC.

*ຕົວຊີ້ບອກ:*

**1.6.1** *ມີຄຳໃຫ້ການທີ່ເໝາະສົມລວມໄວ້ຢູ່ໃນເອກະສານທາງການຂອງກິດຈະການປ່າໄມ້ ຫຼືກອງປ່າໄມ້ທີ່ໃຫ້ຄຳມຸ່ງໝັ້ນກັບອີງການທີ່ຈະຍຶດໝັ້ນກັບມາດຕະຖານການຍັ້ງຢືນຂອງ FSC ກ່ຽວກັບປ່າພາຍໃຕ້ການປະເມີນ. ສຳລັບການດຳເນີນການຂະໜາດໃຫຍ່ (>10.000 ha) ນັ້ນ, ທາງ FME ຈະມີນະໂຍບາຍເປີດເຜີຍຕໍ່ສັງຄົມ.*

**1.6.2** *ໃນບ່ອນທີ່ເຈົ້າຂອງ/ຜູ້ຈັດການມີຄວາມຮັບຜິດຊອບບາງອັນຕໍ່ທີ່ດິນປ່າໄມ້ບໍ່ໄດ້ເອົາລວມເຂົ້າໃນຂອບເຂດຂອງການຍັ້ງຢືນ, ຈະຕ້ອງມີຄຳໝັ້ນສັນຍາໄລຍະຍາວເພື່ອເຮັດການຈັດການກັບທຸກປ່າໄມ້ຕາມ FSC P&C. ການເຮັດການຍັ້ງຢືນ ປ່າໄມ້ເຫຼົ່ານີ້ຈະຕ້ອງປະຕິບັດຕາມນະໂຍບາຍ FSC ກ່ຽວກັບການຍັ້ງຢືນບາງສ່ວນ.*

© 2005 GFA Consulting Group.  All rights reserved.



***ຫຼັກການທີ #2: ກຳມະສິດ ແລະ ສິດການນຳໃຊ້ ແລະ ຄວາມຮັບຜິດຊອບ***
***ກຳມະສິດ ແລະສິດນຳໃຊ້ໄລຍະຍາວຕໍ່ກັບຊັບພະຍາກອນທີ່ດິນ ແລະປ່າໄມ້ຈະຕ້ອງໄດ້ຮັບການກຳນົດ, ບັນທຶກ ແລະຈັດຕັ້ງຢ່າງຊັດເຈນຖືກຕ້ອງຕາມກົດໝາຍ.***

***ມາດຖານ 2.1*** *ຫຼັກຖານອັນຊັດເຈນຂອງກຳມະສິດໄລຍະຍາວ ແລະສິດການນຳໃຊ້ປ່າໄມ້ຕໍ່ກັບທີ່ດິນ (ໃບຕາດິນ, ສິດຕາມຮີດຄອງ, ຫຼືສັນຍາໃຫ້ເຊົ່າ) ແມ່ນຈະຕ້ອງໄດ້ຮັບການພິສູດໃຫ້ເຫັນ.*

*<u>ຕົວຊີ້ບອກ:</u>*

***2.1.1*** *ເອກະສານບອກເຖິງສະຖານະພາບທາງກົດໝາຍຂອງທີ່ດິນ ແລະການນຳໃຊ້ປ່າໄມ້ທີ່ມີຢູ່.*

***2.1.2*** *ຄວາມຂັດແຍ້ງທາງດ້ານກຳມະສິດ ແລະສິດການນຳໃຊ້ໄດ້ຮັບການກຳນົດ, ຮັບຮອງ ແລະບັນທຶກເປັນເອກະສານ.*

***2.1.3*** *FMU ມີຄວາມມຸ່ງໝັ້ນຕໍ່ກັບການຄຸ້ມຄອງປ່າໄມ້ໄລຍະຍາວ ຢ່າງໜ້ອຍແມ່ນຄວາມຍາວໃນໄລຍະການໝູນວຽນ 1 ຮອບ ຫຼືຮອບວຽນການເກັບກ່ຽວ.*

**ມາດຖານ 2.2** ປະຊາຊົນທ້ອງຖິ່ນ ກັບ ສິດຊົມໃຊ້ຫຼື ສິດຖືຄອງຕາມປະເພນີ ຫຼື ສິດຕາມກົດໝາຍຕ້ອງໄດ້ຮັບການຄຸ້ມຄອງຕາມຂອບເຂດທີ່ຈຳເປັນ ເພື່ອປ້ອງກັນສິດ ຫຼື ຊັບພະຍາກອນຂອງເຂົາເຈົ້າ ຕໍ່ກັບກິດຈະການປ່າໄມ້.

*<u>ຕົວຊີ້ບອກ:</u>*

***2.2.1*** *ຊຸມຊົນທ້ອງຖິ່ນທີ່ມີກຳມະສິດຕາມກົດໝາຍ ຫຼືຕາມຮີດຄອງ ຫຼືສິດນຳໃຊ້ໄດ້ຮັບການກຳນົດ, ບັນທຶກເປັນເອກະສານ ແລະສ້າງເປັນແຜນທີ່ໄວ້.*

***2.2.2*** *ຂະບວນການວາງແຜນຂອງ FMU ລວມມີການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນ ຫຼືຝ່າຍຕ່າງໆທີ່ມີກຳມະສິດ ຫຼືສິດການນຳໃຊ້ຕາມກົດໝາຍ ຫຼືຕາມຮີດຄອງ.*

***2.2.3*** *ຜູ້ຈັດການປ່າໃຫ້ການຄວບຄຸມການດຳເນີນການໃນປ່າກັບຊຸມຊົນທ້ອງຖິ່ນໃນລະດັບທີ່ຈຳເປັນເພື່ອປົກປ້ອງສິດ ແລະຊັບພະຍາກອນຂອງເຂົາເຈົ້າ.*

***2.2.4*** *ໃນບ່ອນທີ່ຊຸມຊົນໄດ້ມອບການຄວບຄຸມກຳມະສິດ ຫຼືສິດການນຳໃຊ້ ຫຼືສ່ວນໃດໜຶ່ງຕາມກົດໝາຍ ຫຼືຕາມຮີດຄອງຂອງເຂົາເຈົ້າ, ອັນນີ້ສາມາດໄດ້ຮັບການຢັ້ງຢືນໂດຍຂໍ້ຕົກລົງສັນຍາທີ່ເປັນເອກະສານ ແລະ/ຫຼືການສຳພາດກັບຕົວແທນຂອງຊຸມຊົນທ້ອງຖິ່ນ.*

**ມາດຖານ 2.3** Appropriate mechanisms shall be employed to resolve disputes over tenure claims and use rights.  The circumstances and status of any outstanding disputes will be explicitly considered in the certification evaluation.  Disputes of substantial magnitude involving a significant number of interests will normally disqualify an operation from being certified.

*<u>ຕົວຊີ້ບອກ:</u>*

***2.3.1*** ***ມີ****ຂັ້ນຕອນດຳເນີນການທີ່ໄດ້ເຮັດເປັນເອກະສານທີ່ເໝາະສົມເພື່ອແກ້ໄຂຂໍ້ຮຽກຮ້ອງກຳມະສິດ ແລະຂໍ້ຂັດແຍ່ງສິດການນຳໃຊ້* ***(SLIMF:*** *ບໍ່ມີຂໍ້ຂັດແຍ້ງທີ່ບໍ່ໄດ້ຮັບການແກ້ໄຂຕົ້ນຕໍກ່ຽວຂ້ອງກັບຂໍ້ຮຽກຮ້ອງກຳມະສິດ ແລະສິດນຳໃຊ້ຢູ່ໃນປ່າໄມ້. ຂໍ້ຂັດແຍ້ງ ຫຼືການຮ້ອງທຸກແມ່ນໄດ້ຮັບການແກ້ໄຂໂດຍການນຳໃຊ້ກົນໄກ ແລະສະຖາບັນທີ່ຍອມຮັບໄດ້ຢູ່ໃນທ້ອງຖິ່ນ).*

© 2005 GFA Consulting Group.  All rights reserved.

2.3.2 ບັນທຶກຂໍ້ຂັດແຍ້ງ ແລະສະຖານະພາບຂອງການແກ້ໄຂບັນດາຂໍ້ຂັດແຍ້ງນັ້ນໄດ້ຮັບການຮັກສາໄວ້, ລວມທັງຫຼັກຖານທີ່ກ່ຽວຂ້ອງກັບຂໍ້ຂັດແຍ້ງ ແລະເອກະສານຂັ້ນຕອນດຳເນີນການເພື່ອແກ້ໄຂຂໍ້ຂັດແຍ້ງນັ້ນ.

2.3.3 ມີນະໂຍບາຍຄຸ້ມຄອງ ແລະຂັ້ນຕອນດຳເນີນການຕາມຄວາມຮຽກຮ້ອງຕ້ອງການນັ້ນ, ໃນກໍລະນີຂອງຂໍ້ຂັດແຍ້ງລະຫວ່າງຊຸມຊົນທ້ອງຖິ່ນ ແລະຜູ້ຈັດການປ່າໄມ້ກ່ຽວຂ້ອງກັບສິດທິຕໍ່ທີ່ດິນ, ການດຳເນີນການປ່າໄມ້ເຊິ່ງເປັນການລະເມີດສິດດັ່ງກ່າວໃນອະນາຄົດ ໂດຍທີ່ໃຫ້ຊຸມຊົນຢຸດຊະງັກໄປຈົນກວ່າຂໍ້ຂັດແຍ້ງໄດ້ຮັບການແກ້ໄຂ (ບໍ່ໃຊ້ໄດ້ກັບ **SLIMF**).

2.3.4 ບໍ່ມີຫຼັກຖານຂອງກຳມະສິດ ແລະ/ຫຼືສິດນຳໃຊ້ບໍ່ໄດ້ຮັບການແກ້ໄຂໃດໜຶ່ງຢູ່ທີ່ມີຄວາມສຳຄັນຫຼາຍ ແລະພົວພັນກັບຜົນປະໂຫຍດທີ່ສຳຄັນຫຼາຍຢ່າງ. ອັນນີ້ໃຊ້ໄດ້ກັບທຸກ FMUs ພາຍໃຕ້ຄວາມຮັບຜິດຊອບຂອງເຈົ້າຂອງ/ຜູ້ຈັດການປ່າໄມ້.

© 2005 GFA Consulting Group.  All rights reserved.

**ຫຼັກການທີ #3:  ສິດຂອງປະຊາຊົນດັ້ງເດີມ**

ຕ້ອງໄດ້ຮັບຮູ້ ແລະ ນັບຖື ສິດທາງກົດໝາຍ ແລະ ສິດຕາມປະເພນີ ຂອງປະຊາຊົນດັ້ງເດີມ ໃນການ ເປັນເຈົ້າຂອງ , ການຊົມໃຊ້ ແລະ ຄຸ້ມຄອງທີ່ດິນ, ເຂດແດນ ແລະ ຊັບພະຍາກອນຂອງເຂົາເຈົ້າ.

**ມາດຖານ 3.1** ປະຊາຊົນທ້ອງຖິ່ນ ຕ້ອງຄຸ້ມຄອງການຈັດສັນປ່າໄມ້ໃນເນື້ອທີ່ດິນ ແລະ ເຂດແດນຂອງເຂົາ ເວັ້ນແຕ່ເຂົາເຈົ້າໄດ້ຍິນຍອມໃຫ້ພາກສ່ວນອື່ນ.

*<u>ຕົວຊີ້ບອກ:</u>*

*3.1.1 ເອກະລັກ, ທີ່ຕັ້ງ ແລະປະຊາຊົນຄົນພື້ນເມືອງ ແລະດັ້ງເດີມທັງໝົດ, ລວມທັງກຸ່ມຜູ້ອົບພະຍົກທີ່ອາໃສຢູ່ໃນເຂດພື້ນທີ່ການຄຸ້ມຄອງແມ່ນໄດ້ຮັບການບັນທຶກເປັນເອກະສານໂດຍຜູ້ຈັດການປ່າໄມ້.*

*3.1.2 ທຸກຂໍ້ຮຽກຮ້ອງຕໍ່ທີ່ດິນ, ອານາເຂດ ຫຼືສິດຕາມຮີດຄອງທີ່ມີຢູ່ພາຍໃນເຂດການຄຸ້ມຄອງໄດ້ຮັບການບັນທຶກເປັນເອກະສານ ແລະ/ຫຼືໄດ້ເຮັດເປັນແຜນທີ່ໄວ້ຊັດເຈນ.*

*3.1.3 ສິດທີ່ໄດ້ກຳນົດໄວ້ຢູ່ໃນຮູບການຂອງຕົວຊີ້ບອກ 3.1.2 ໄດ້ຮັບການເຄົາລົບ.*

*3.1.4 ການດຳເນີນການຄຸ້ມຄອງປ່າແມ່ນບໍ່ມີຢູ່ໃນພື້ນທີ່ໄດ້ລະບຸໃນຕົວຊີ້ບອກ 3.1.2 ຂ້າງເທິງ, ໂດຍທີ່ບໍ່ມີຫຼັກຖານຊັດເຈນໃນຄວາມຍິນຍອມເສລີ ແລະໄດ້ຮັບແຈ້ງຂອງຄົນທ້ອງຖິ່ນ ແລະຄົນພື້ນເມືອງຮຽກຮ້ອງຕໍ່ກັບສິດໃນທີ່ດິນ, ສິດໃນອານາເຂດ ຫຼືສິດຕາມຮີດຄອງດັ່ງກ່າວ.*

**ມາດຖານ 3.2** ການຈັດສັນຄຸ້ມຄອງປ່າໄມ້ບໍ່ຄວນຂົ່ມຂູ່ ຫຼື ເຮັດໃຫ້ຊັບພະຍາກອນ ຫຼື ສິດຖືຂອງປະຊາຊົນດັ້ງເດີມ ຫຼຸດລົງ ບໍ່ວ່າທາງກົງ ຫຼື ທາງອອ້ມ.

*<u>ຕົວຊີ້ບອກ:</u>*

*3.2.1 ບໍ່ມີຫຼັກຖານ ຫຼືການບົ່ງບອກອັນໃດທີ່ທາງ FME ຂົ່ມຂູ່ຕໍ່ສິດ ແລະຊັບພະຍາກອນຂອງຄົນພື້ນເມືອງ.*

*3.2.2 ຄົນພື້ນເມືອງໄດ້ຮັບແຈ້ງຊັດເຈນກ່ຽວກັບຜົນກະທົບໃດໜຶ່ງທີ່ການຄຸ້ມຄອງປ່າໄມ້ອາດຈະມີຕໍ່ກັບຊັບພະຍາກອນ ຫຼືສິດໃນກຳມະສິດ ແລະຊາຍແດນຮ່ວມກັນຂອງທີ່ດິນຊຸມຊົນໄດ້ຮັບການປົກຫຼັກໝາຍພາຍໃຕ້ການຊີ້ນຳກວດກາຂອງຊຸມຊົນກ່ອນການດຳເນີນການໃດໜຶ່ງ.*

**ມາດຖານ 3.3** ຜູ້ຈັດສັນຄຸ້ມຄອງປ່າຕ້ອງຮັບຮູ້ ແລະ ຄຸ້ມຄອງ ພື້ນທີ່ ພິເສດທີ່ມີຄວາມສຳຄັນ ທາງດ້ານ ວັດທະນາທຳ, ນິເວດວິທະຍາ, ເສດຖະກິດ ຫຼື ສາດສະໜາ ຂອງປະຊາຊົນດັ້ງເດີມ ແລະ ຕ້ອງໄດ້ກຳນົດ ຢ່າງຈະແຈ້ງໂດຍມີການຮ່ວມມືກັບປະຊາຊົນດັ່ງກ່າວ.

*<u>ຕົວຊີ້ບອກ:</u>*

*3.3.1 ສະຖານທີ່ສຳຄັນທາງວັດທະນະທຳ, ນິເວດ, ເສດຖະກິດ ຫຼືສາດສະໜາອັນພິເສດຕໍ່ກັບຄົນທ້ອງຖິ່ນໄດ້ຮັບການລະບຸ ແລະເຮັດເປັນແຜນທີ່ໄວ້ດ້ວຍການຮ່ວມມືກັບພາກສ່ວນທີ່ໄດ້ຮັບຜົນກະທົບ ແລະສົນໃຈ (**SLIMF**: ສະຖານທີ່ສຳຄັນທາງວັດທະນະທຳ, ນິເວດ, ເສດຖະກິດ ຫຼືສາດສະໜາອັນພິເສດຕໍ່ກັບຄົນທ້ອງຖິ່ນ ແລະຄວາມຮຽກຮ້ອງຕ້ອງການພິເສດໃດໜຶ່ງໄດ້ຖືກຮັບຮູ້).*

*3.3.2 ນະໂຍບາຍ ແລະຂັ້ນຕອນດຳເນີນການເພື່ອການປົກປ້ອງທີ່ຕັ້ງດັ່ງກ່າວລະຫວ່າງການດຳເນີນການຄຸ້ມຄອງໄດ້ຮັບການບັນທຶກເປັນເອກະສານ ແລະໄດ້ຖືກຈັດຕັ້ງປະຕິບັດ (**SLIMF**: ມາດຕະການທີ່ເໝາະສົມເພື່ອການປົກປ້ອງສະຖານທີ່ດັ່ງກ່າວໃນລະຫວ່າງການດຳເນີນການຄຸ້ມຄອງໄດ້ຮັບການຈັດຕັ້ງປະຕິບັດ).*

© 2005 GFA Consulting Group.  All rights reserved.

**ມາດຖານ 3.4** ປະຊາຊົນດັ້ງເດີມ ຕ້ອງໄດ້ຄ່າຕອບແທນສຳຫຼັບການນຳໃຊ້ພູມປັນຍາພື້ນບ້ານ ໃນການນຳໃຊ້ຊະນິດພັນໄມ້ ຫຼື ລະບົບຄຸ້ມຄອງປ່າໄມ້. ຄ່າຕອງແທນນີ້ຕ້ອງໄດ້ຮັບການຕົກລົງຢ່າງເປັນທາງການກັບການ ຍິນຍອມ ຂອງພວກເຂົາກ່ອນຈະດຳເນີນການ.

*<u>ຕົວຊີ້ບອກ:</u>*

***3.4.1*** *ຄວາມຮູ້ພື້ນບ້ານຂອງຄົນທ້ອງຖິ່ນກ່ຽວກັບການນຳໃຊ້ຊະນິດພັນຕ່າງໆໃນປ່າໄມ້ ແລະລະບົບການຄຸ້ມຄອງຢູ່ໃນການດຳເນີນງານປ່າ ເຊິ່ງກຳລັງຖືກນຳໃຊ້ ຫຼືອາດຈະຖືກນຳໃຊ້ໄປໃນທາງການຄ້າໂດຍທາງ FME ໄດ້ຮັບການບັນທຶກໄວ້.*

***3.4.2*** *ມີຂໍ້ຕົກລົງສັນຍາເປັນລາຍລັກອັກສອນ ຫຼືປາກເປົ່າກ່ຽວກັບເງື່ອນໄຂຂອງການຊົດເຊີຍນັ້ນ ເມື່ອມີການນຳໃຊ້ຄວາມຮູ້ທ້ອງຖິ່ນເພື່ອຈຸດປະສົງທາງການຄ້າ.*

***3.4.2*** *ໄດ້ມີການຈ່າຍທຸກຄ່າຊົດເຊີຍໃຫ້ຕາມທີ່ໄດ້ຕົກລົງກັນ.*

© 2005 GFA Consulting Group.  All rights reserved.

**ຫຼັກການ #4:  ການພົວພັນຂອງຊຸມຊົນ ແລະ ສິດຂອງຜູ້ອອກແຮງງານ**

ກິດການຄຸ້ມຄອງປ່າໄມ້ແມ່ນ ຕ້ອງຮັກສາ ຫຼື ສົ່ງເສີມຄວາມເປັນຢູ່ທາງສັງຄົມ ແລະ ທາງເສດຖະກິດໃນໄລຍະຍາວຂອງຜູ້ໃຊ້ແຮງງານ ແລະ ຊຸມຊົນທ້ອງຖິ່ນ.

**ມາດຖານ 4.1** ຊຸມຊົນທີ່ຢູ່ພາຍໃນ ແລະ ໃກ້ຄຽງເຂດຄຸ້ມຄອງປ່າໄມ້ ຕ້ອງມີໂອກາດ ໃນການໄດ້ຮັບວຽກ, ຝຶກອົບຮົມ ແລະ ບໍລິການຕ່າງໆ.

*<u>ຕົວຊີ້ບອກ:</u>*

***4.1.1*** *ຄົນທ້ອງຖິ່ນ ແລະຄົນທີ່ເພິ່ງພາປ່າໄມ້ມີໂອກາດເທົ່າທຽມກັນໃນການເຂົ້າເຖິງການຈ້າງເຮັດວຽກ ແລະການຝຶກອົບຮົມ.*

***4.1.2*** *ຢູ່ໃນການດຳເນີນງານຂະໜາດໃຫຍ່ (> 10.000 ha) ການຝຶກອົບຮົມ ແລະ/ຫຼືຮູບແບບການຊ່ວຍເຫຼືອອື່ນທີ່ເໝາະສົມຕໍ່ກັບຄົນທ້ອງຖິ່ນ ແລະກຳມະກອນເພື່ອໃຫ້ບັນລຸໄດ້ຕາມຄວາມຕ້ອງການໃນການປະກອບພະນັກງານໄລຍະຍາວນັ້ນໄດ້ຮັບການພັດທະນາ ແລະສະໜັບສະໜູນ.*

***4.1.3*** *ໄດ້ມີການຕອບສະໜອງໂຄງລ່າງພື້ນຖານ ແລະສິ່ງອຳນວຍຄວາມສະດວກໃນທ້ອງຖິ່ນໃຫ້ໃນລະດັບທີ່ເໝາະສົມຕໍ່ກັບຂະໜາດຂອງຊັບພະຍາກອນປ່າໄມ້ (ໃຊ້ບໍ່ໄດ້ກັບການດຳເນີນການຂອງ **SLIMF**).*

***4.1.4*** *ບັນດາລູກຈ້າງບໍ່ໄດ້ຮັບການຈຳແນກແຕກຕ່າງຢູ່ໃນການຈ້າງເຮັດວຽກ, ຄວາມກ້າວໜ້າ, ຜົນຕອບແທນໃນການໃຫ້ອອກຈາກວຽກ ແລະການຈ້າງງານທີ່ກ່ຽວຂ້ອງກັບການປະກັນສັງຄົມ.*

***4.1.5*** *ຜູ້ຈັດການປ່າໄມ້ຈະຮັບປະກັນວ່າລູກຈ້າງ, ຜູ້ຮັບເໝົາ ແລະຜູ້ຮັບເໝົາຍ່ອຍທຸກໆຄົນທີ່ເຮັດວຽກຢູ່ໃນປ່າໄມ້ທີ່ເປັນຜູ້ມີໃບຢັ້ງຢືນນັ້ນໄດ້ຮັບການຈ່າຍຄ່າຈ້າງ ແລະຜົນປະໂຫຍດອື່ນທີ່ເປັນທຳ, ເຊິ່ງບັນລຸໄດ້ ຫຼືເກີນກວ່າທີ່ກົດໝາຍກຳນົດທັງໝົດ ແລະບັນດາຜົນຕອບແທນເຫຼົ່ານັ້ນແມ່ນປຽບທຽບໄດ້ກັບອາຊີບອື່ນໆຢູ່ໃນພາກພື້ນດຽວກັນ.*

**ມາດຖານ 4.2** ການຈັດສັນຄຸ້ມຄອງປ່າໄມ້ ຕ້ອງບັນລຸຕາມກົດໝາຍທີ່ນຳໃຊ້ ແລະ/ຫຼື ຂໍ້ກຳນົດຕ່າງໆ ທີ່ກ່ຽວຂ້ອງເຖິງສຸຂະພາບ ແລະ ຄວາມປອດໄພຂອງລູກຈ້າງ ແລະ ຄອບຄົວຂອງເຂົາ.

*<u>ຕົວຊີ້ບອກ:</u>*

***4.2.1*** *ຜູ້ຈັດການຄຸ້ນເຄີຍກັບບົດແນະນຳ ແລະກົດລະບຽບທາງດ້ານຄວາມປອດໄພ ແລະສຸຂະພາບທີ່ກ່ຽວຂ້ອງ. ສຳລັບອົງການຈັດຕັ້ງຂະໜາດໃຫຍ່ (> 10.000 ha) ຈະຕ້ອງມີນະໂຍບາຍດ້ານຄວາມປອດໄພ ແລະສຸຂະພາບ ແລະລະບົບການຄຸ້ມຄອງທີ່ເປັນລາຍລັກອັກສອນ.*

***4.2.2*** *ຜູ້ຈັດການໄດ້ປະເມີນຄວາມສ່ຽງຕໍ່ກັບພະນັກງານໃນໜ້າວຽກ ແລະອຸປະກອນສະເພາະ, ແລະໃຊ້ມາດຕະການເພື່ອຫຼຸດຜ່ອນ ແລະກຳຈັດຄວາມສ່ຽງດັ່ງກ່າວ (**SLIMF**: ທຸກວຽກທີ່ໄດ້ເຮັດຢູ່ໃນປ່າໄມ້ແມ່ນຈະຕ້ອງເປັນໄປຕາມກົດໝາຍ ແລະກົດລະບຽບດ້ານຄວາມປອດໄພ ແລະສຸຂະພາບ).*

***4.2.3*** *ການຝຶກອົບຮົມເລື່ອງຄວາມປອດໄພໄດ້ຮັບການຈັດຕັ້ງປະຕິບັດກ່ຽວຂ້ອງກັບໜ້າວຽກຂອງກຳມະກອນ ແລະອຸປະກອນທີ່ໃຊ້.*

***4.2.4*** *ກຳມະກອນ, ລວມທັງຜູ້ຮັບເໝົາຍ່ອຍແມ່ນໄດ້ຮັບອຸປະກອນປ້ອງກັນຄວາມປອດໄພກ່ຽວຂ້ອງກັບໜ້າວຽກຂອງກຳມະກອນ, ອຸປະກອນທີ່ໃຊ້ ແລະກົງກັບກົດລະບຽບການປະຕິບັດຂອງ ILO ກ່ຽວກັບຄວາມປອດໄພ ແລະສຸຂະພາບຢູ່ໃນວຽກປ່າໄມ້. (**SLIMF**: ທຸກວຽກທີ່ເຮັດຢູ່ໃນປ່າໄມ້ຕ້ອງເປັນໄປຕາມກົດໝາຍ ແລະກົດລະບຽບສຸຂະພາບ ແລະຄວາມປອດໄພ. ຜູ້ຈັດການປ່າໄມ້ຈະໃຊ້ຄວາມພະຍາຍາມອັນສົມຄວນເພື່ອປະຕິບັດ*

© 2005 GFA Consulting Group.  All rights reserved.

*ຕາມກົດເກນການປະຕິບັດຂອງ ILO ກ່ຽວກັບຄວາມປອດໄພ ແລະສຸຂະພາບຢູ່ໃນປ່າໄມ້ ຖ້າມີຢູ່ໃນປະເທດ).*

***4.2.5*** *ໃນບ່ອນທີ່ກຳມະກອນພັກເຊົາຢູ່ໃນແຄ້ມ, ຢ່າງໜ້ອຍສະພາບທີ່ພັກ ແລະດ້ານໂພຊະນາການຕ້ອງປະຕິບັດຕາມກົດລະບຽບການປະຕິບັດຂອງ ILO ກ່ຽວກັບຄວາມປອດໄພ ແລະສຸຂະພາບໃນປ່າໄມ້.*

***4.2.6*** *ມີລະບົບການຄວບຄຸມພາຍໃນທີ່ຮັບປະກັນດ້ານສຸຂະພາບ ແລະການດູແລເອົາໃຈໃສ່ (ລວມທັງສະຖິຕິອຸປະຕິເຫດ).*

***4.2.7*** *ນາຍຈ້າງໃຫ້ການສະໜັບສະໜູນມາດຕະການທາງດ້ານສຸຂະພາບ ແລະການດູແລເອົາໃຈໃສ່ (ຕົວຢ່າງ ຄ່າອັດຕາສຳລັບອຸປະກອນຄວາມປອດໄພບຸກຄົນ).*

***4.2.8*** *ມີຜົນປະໂຫຍດການຊ່ວຍເຫຼືອທີ່ໄດ້ຮັບປະກັນໄວ້ໃນກໍລະນີມີອຸປະຕິເຫດ.*

***4.2.9*** *ຜູ້ຮັບເໝົາບໍ່ປະຕິບັດຕາມຕົວຊີ້ບອກທັງໝົດທີ່ໄດ້ກ່າວມາຂ້າງເທິງແມ່ນບໍ່ໃຫ້ເຂົ້າຮ່ວມໃນການດຳເນີນການປ່າໄມ້.*

***4.2.10*** *ຄ່າຈ້າງ ແລະສະຫວັດດີການສັງຄົມຂອງກຳມະກອນຢູ່ໃນ FMU, ລວມທັງຜູ້ຮັບເໝົາຍ່ອຍນັ້ນເທົ່າກັບ ຫຼື ສູງກວ່າລະດັບສະເລ່ຍຢູ່ໃນພາກພື້ນ.*

**ມາດຖານ** 4.3 ຕ້ອງຮັບປະກັນສິດຂອງຜູ້ອອກແຮງງານໃນເວລາຈັດຕັ້ງ ແລະ ເຈລະຈາຕໍ່ລອງ ກັບນາຍຈ້າງ ດັ່ງທີ່ໄດ້ລະບຸໄວ້ໃນ ສົນທິສັນຍາກ່ຽວກັບອົງການຈັດຕັ້ງແຮງງານສາກົນ (ILO) ປີ87 ແລະ 98.

*ຕົວຊີ້ບອກ:*

***4.3.1*** *ສະພາບການຈ້າງງານເປັນໄປຕາມສົນທິສັນຍາອົງການແຮງງານສາກົນ 87 (ສົນທິສັນຍານີ້ກ່ຽວຂ້ອງກັບສິດຂອງກຳມະກອນຄື: ເສລີພາບຂອງສະມາຄົມ ແລະການປົກປ້ອງສິດເພື່ອຈັດຕັ້ງ).*

***4.3.2*** *ສະພາບການຈ້າງງານເປັນໄປຕາມສົນທິສັນຍາອົງການແຮງງານສາກົນ 98 (ສົນທິສັນຍານີ້ພົວພັນກັບສິດຂອງພະນັກງານເພື່ອ: ຈັດຕັ້ງ ແລະຕໍ່ລອງເປັນກຸ່ມ).*

***4.3.3*** *ບ່ອນຕິດຕໍ່ສຳລັບກຳມະກອນທີ່ມີບັນຫາໄດ້ຮັບການສ້າງຕັ້ງຂຶ້ນ. ກຳມະກອນຄວນມີໂອກາດສະແດງຄວາມເປັນຫ່ວງຂອງເຂົາເຈົ້າໃນຮູບແບບທີ່ເປັນຄວາມລັບ (ຕົວຢ່າງ ຫີບຮັບຟັງຄຳຄິດເຫັນ).*

***4.3.4*** *ຄ່າຈ້າງ, ເງິນເດືອນ ແລະຜົນປະໂຫຍດທາງດ້ານສະຫວັດດີການສັງຄົມອື່ນໆທີ່ທາງນາຍຈ້າງ ແລະລູກຈ້າງໄດ້ຕົກລົງກັນ ຫຼືໂດຍຜູ້ຕາງໜ້າຂອງເຂົາເຈົ້າ (ຕົວຢ່າງ ສະຫະພາບ) ແມ່ນໄດ້ຮັບການກຳນົດໄວ້ໃນສັນຍາ.*

**ມາດຖານ** 4.4 ກິດຈະການ ແລະ ການວາງແຜນຈັດສັນຄຸ້ມຄອງ ຕ້ອງນຳເອົາຜົນຂອງການປະເມີນກະທົບທາງສັງຄົມນຳ. ຕ້ອງມີການປຶກສາກັບປະຊາຊົນ ແລະ ກຸ່ມ(ຍິງ ແລະ ຊາຍ) ທີ່ຖືກຜົນກະທົບໂດຍກົງຈາກ ການຈັດສັນຄຸ້ມຄອງປ່າ.

*ຕົວຊີ້ບອກ:*

***4.4.1*** *ມີລະບົບພ້ອມທີ່ໃຫ້ການປະເມີນຜົນທາງສັງຄົມທີ່ເໝາະສົມຕໍ່ກັບຂະໜາດ ແລະຄວາມຕັ້ງໃຈຂອງການດຳເນີນງານທີ່:*

*-ລະບຸກຸ່ມໄດ້ຮັບຜົນກະທົບ*

*-ກວມເຖິງການປຶກສາຫາລືກັບກຸ່ມທີ່ໄດ້ຮັບຜົນກະທົບ*

*-ລະບຸຜົນກະທົບຕົ້ນຕໍຂອງການດຳເນີນການໃນກຸ່ມເຫຼົ່ານັ້ນ*

*-ລະບຸມາດຕະຖານທີ່ຈະຊ່ວຍປັບປຸງຜົນກະທົບທາງລົບທີ່ໄດ້ລະບຸ*

*- ໃຫ້ການຕິດຕໍ່ປຶກກະຕິກັບຜູ້ໄດ້ຮັບຜົນກະທົບ ເພື່ອຕິດຕາມປະສິດທິຜົນ ແລະມາດຕະການ.*

© 2005 GFA Consulting Group.  All rights reserved.



***4.4.2*** *ຜົນກະທົບທີ່ເປັນຜົນຮ້າຍ, ໂອກາດຕໍ່ຜົນກະທົບທາງບວກ ແລະຂອບເຂດຄວາມຂັດແຍ້ງທີ່ເປັນໄປໄດ້ທີ່ໄດ້ຮັບການລະບຸໂດຍການປະເມີນຜົນແມ່ນໄດ້ຮັບການກ່າວເຖິງຢູ່ໃນແຜນການຄຸ້ມຄອງຢ່າງພຽງພໍ (ບໍ່ໃຊ້ໄດ້ກັບ **SLIMF**).*

***4.4.3*** *ມີການຮັກສາບັນຊີລາຍຊື່ຂອງພາກສ່ວນຕ່າງໆທີ່ຫຼ້າສຸດ (**SLIMF**: ກິດຈະການຮູ້ຈັກກັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ).*

***4.4.4*** *ມີລະບົບການປຶກສາຫາລືກັບພາກສ່ວນກ່ຽວຂ້ອງຕ່າງໆ (ກອບປະຊຸມໂຕະມົນ) ແລະມັນໄດ້ຮັບການຈັດຕັ້ງປະຕິບັດ.*

**ມາດຖານ 4.5** ຕ້ອງນຳໃຊ້ກົນໄກທີ່ເໝາະສົມ ເພື່ອແກ້ໄຂຂໍ້ຂ້ອງໃຈ ແລະ ເພື່ອໃຫ້ການຊົດເຊີຍທີ່ເປັນ ໃນກໍລະນີ ໄດ້ຮັບຜົນເສັຍຫາຍ ຫຼື ສູນເສັຍ ທີ່ສົ່ງຜົນກະທົບ ຕໍ່ສິດທາງກົດໝາຍ, ຊັບສິນ, ຊັບພະຍາກອນ ຫຼື ຊີວິດການເປັນຢູ່ ຂອງປະຊາຊົນທ້ອງຖິ່ນ. ຕ້ງມີມາດຕະການເພື່ອ ຫຼີກລ້ຽງການສູນເສັຍ ແລະ ຜົນເສັຍຫາຍດັ່ງກ່າວ

*<u>ຕົວຊີ້ບອກ:</u>*

***4.5.1*** *ຂັ້ນຕອນດຳເນີນການແກ້ໄຂຂໍ້ຂັດແຍ່ງ ແລະການຮ້ອງທຸກ ແລະການກຳນົດຄ່າຊົດເຊີຍຕໍ່ກັບຄວາມເສຍຫາຍຫຼືຜົນເສຍຫາຍນັ້ນໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະບໍ່ປ່ຽນແປງ. ການດຳເນີນການຂະໜາດໃຫຍ່ (> 10.000 ha) ມີຂະບວນດຳເນີນການແກ້ໄຂຂໍ້ຂັດແຍ່ງ ແລະປະກາດຄວາມສາມາດນຳໃຊ້ຂອງມັນຢູ່ໃນກອງປະຊຸມພາກສ່ວນຕ່າງໆ).*

***4.5.2*** *FME ໃຊ້ທຸກຄວາມພະຍາຍາມເພື່ອຫຼີກເວັ້ນຄວາມເສຍຫາຍ ແລະຜົນເສຍຫາຍກະທົບຕໍ່ກັບຄົນທ້ອງຖິ່ນ ແລະໃນການແກ້ໄຂການຮ້ອງທຸກກ່ຽວຂ້ອງກັບສິດຕາມກົດໝາຍ, ການຊົດເຊີຍຄວາມເສຍຫາຍ ແລະຜົນກະທົບທາງລົບ.*

© 2005 GFA Consulting Group.  All rights reserved.

**ຫຼັກການ # 5:	ຜົນປະໂຫຍດຈາກປ່າ**

ກິດຈະການຄຸ້ມຄອງປ່າໄມ້ ຕ້ອງສົ່ງເສີມການນຳໃຊ້ຜະລິດຕະຜົນປ່າໄມ້ຕ່າງໆ ແລະ ການບໍລິການ ຢ່າງມີປະສິດ ທິຜົນ ເພື່ອຮັບປະກັນຜົນປະໂຫຍດ ທາງດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມຢ່າງ ກວ້າງຂວາງ.

**ມາດຖານ 5.1** ການຈັດສັນຄຸ້ມຄອງປ່າໄມ້ ຕ້ອງສູ້ຊົນໃຫ້ມີເສດຖະກິດ, ໃນຂະນະດຽວກັນກໍຕ້ອງພິຈາລະນາ ໄລ່ລຽງທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ການດຳເນີນງານ ໃນການຜະລິດ, ແລະ ຮັບປະກັນໄດ້ວ່າ ການລົງທຶນແມ່ນຈຳເປັນ ຕ້ອງບູລະນະຮັກສາຜົນຜະລິດທາງດ້ານນິເວດວິທະຍາຂອງປ່າໄມ້.

*<u>ຕົວຊີ້ບອກ:</u>*

***5.1.1*** *ມີແຜນວຽກ ແລະງົບປະມານສະແດງໃຫ້ເຫັນຄ່າໃຊ້ຈ່າຍ ແລະລາຍຮັບທີ່ໄດ້ຄາດການໄວ້ ຢ່າງໜ້ອຍສຳລັບປີການເງິນປະຈຸບັນ.*

***5.1.2*** *ງົບປະມານປະຈຳປີລະບຸຄ່າໃຊ້ຈ່າຍກ່ຽວຂ້ອງກັບການຈັດຕັ້ງປະຕິບັດຄວາມຮັບຜິດຊອບທາງສັງຄົມ ແລະສິ່ງແວດລ້ອມທີ່ໄດ້ລະບຸ **(**ເບິ່ງຫຼັກການທີ **4** ແລະ **6** ຂອງມາດຕະຖານນີ້**),** ພ້ອມກັບຄ່າໃຊ້ຈ່າຍການດຳເນີນການທັງໝົດ (**SLIMF**: ຜູ້ຈັດການປ່າໄມ້ກຳລັງພຸ່ງເປົ້າຢູ່ໃນການແກ້ໄຂທີ່ຈຳເປັນທາງການຄ້າ ເຊິ່ງອະນຸຍາດໃຫ້ເປັນການຄຸ້ມຄອງໄລຍະຍາວ).*

***5.1.3*** *ລາຍຮັບທີ່ໄດ້ຄາດການໄວ້ຢູ່ໃນງົບປະມານປະຈຳປີແມ່ນອີງຕາມການສົມມຸດທີ່ມີເຫດຜົນ ແລະຍຶດໝັ້ນກັບມູນຄ່າຜະລິດຕະພັນປຽບທຽບກັບພາກພື້ນ ແລະບັນທັດຖານແຫ່ງຊາດ.*

***5.1.4*** *ໃນບ່ອນທີ່ຈຳເປັນ, ໄດ້ເຮັດການລົງທຶນເພື່ອຮັກສາປະສິດທິພາບການຜະລິດທາງດ້ານນິເວດຂອງປ່າ.*

**ມາດຖານ 5.2** ການຈັດສັນຄຸ້ມຄອງປ່າໄມ້ ແລະ ການຕະຫຼາດ ຕ້ອງສາມາດກະຕຸກຊຸກຍູ້ໃຫ້ມີ ການນຳໃຊ້ ເຕັມຮູບແບບ ແລະ ການປຸງແຕ່ງຂອງທ້ອງຖິ່ນຕ້ອງໃຫ້ມີ ຜະລິດຕະພັນປ່າໄມ້ຢ່າງຫຼາກຫຼາຍ.

*<u>ຕົວຊີ້ບອກ:</u>*

***5.2.1*** *ໃນບ່ອນທີ່ເປັນໄປໄດ້, FME ຄວນສົ່ງເສີມການນຳໃຊ້ ແລະການເກັບກູ້ຊະນິດທີ່ມີໜ້ອຍໃນທົ່ວໄປ ແລະເຄື່ອງປ່າຂອງດົງທີ່ຍືນຍົງ (ໃຊ້ບໍ່ໄດ້ກັບ **SLIMF**).*

***5.2.2*** *ກິດຈະການຂາຍຜະລິດຕະພັນຈາກປ່າໄມ້ຂອງຕົນເອງໃຫ້ກັບອຸສະຫະກຳປຸງແຕ່ງໃນທ້ອງຖິ່ນ ຫຼືພາກ ຖ້າມີ, ນອກຈາກວ່າມີເຫດຜົນອື່ນທີ່ຈຳເປັນຕ້ອງໄດ້ປ່ອຍໄປ.*

**ມາດຖານ 5.3** ການຈັດສັນຄຸ້ມຄອງປ່າໄມ້ ຕ້ອງຫຼຸດຜ່ອນສິ່ງເສດເຫຼືອ ທີ່ກ່ຽວພັນກັບການຂຸດຄົ້ນ ແລະ ການປຸງແຕ່ງໃນເຂດ ແລະ ເພື່ອຫຼີກລ້ຽງຜົນເສັຍຫາຍຕໍ່ຊັບພະຍາກອນປ່າໄມ້ອື່ນໆ.

*<u>ຕົວຊີ້ບອກ:</u>*

***5.3.1*** *ໄດ້ມີການອອກແບບເຕັກນິກການເກັບກູ້ເພື່ອຫຼີກເວັ້ນການທຳລາຍ, ກາເຮັດໃຫ້ເສຍຫາຍ, ການເຮັດໃຫ້ເກີດການເສື່ອມໂຊມກັບໄມ້ປ່າທີ່ຍັງຢືນຕົ້ນຢູ່.*

***5.3.2*** *ວິທີການເພື່ອຫຼີກເວັ້ນຄວາມເສຍຫາຍທີ່ບໍ່ຍອມຮັບໄດ້ຕາມທີ່ໄດ້ກຳນົດຢູ່ໃນທ້ອງຖິ່ນຕໍ່ດິນ, ລະບົບນ້ຳ ແລະໜອງບຶງ, ເຂດແຄມຝັ່ງນ້ຳ, ພື້ນທີ່ປ່າທີ່ເຫຼືອຢູ່ ແລະບ່ອນທີ່ມີຄວາມອ່ອນໄຫວນັ້ນກຳລັງໄດ້ຮັບການຈັດຕັ້ງປະຕິບັດ.*

***5.3.3*** *ຢູ່ໃນການດຳເນີນການຂະໜາດໃຫຍ່ (> 10.000 ha) ໃນບ່ອນການດຳເນີນການປຸງແຕ່ງປະຕິບັດຕາມມາດຕະຖານ ແລະເຕັກໂນໂລຍີຫຼ້າສຸດ ແລະມີຂັ້ນຕອນດຳເນີນການເປັນລາຍລັກອັກສອນທີ່ກຳນົດມາດຕະການເພື່ອຫຼີກເວັ້ນຄວາມເສຍຫາຍ.*

© 2005 GFA Consulting Group. All rights reserved.

*5.3.4 ໄມ້ທີ່ໄດ້ຂຸດຄົ້ນນັ້ນໄດ້ຖືກຂົນອອກຈາກປ່າກ່ອນທີ່ຈະເລີ່ມມີຂະບວນການເສື່ອມສະພາບ ຫຼືເນົ່າເປື່ອຍເກີດຂຶ້ນ.*

*5.3.5 ຂອງເສດຈາກໄມ້ ແລະຄວາມເສຍຫາຍທີ່ມີຕໍ່ກັບປ່າໄມ້ທີ່ຍັງເຫຼືອໃນລະຫວ່າງການຂຸດຄົ້ນ, ໃນການປຸງແຕ່ງຢູ່ກັບທີ່ ແລະການຂຸດຄົ້ນນັ້ນໄດ້ເຮັດໃຫ້ມີໜ້ອຍທີ່ສຸດ.*

*5.3.6 ໄດ້ມີການຝຶກອົບຮົມປົກກະຕິກ່ຽວກັບຂັ້ນຕອນການຂຸດຄົ້ນ ແລະວິທີການຂົນຍ້າຍໃຫ້ກັບພະນັກງານ ແລະກຳມະກອນປົກກະຕິ.*

**ມາດຖານ 5.4** ການຈັດສັນຄຸ້ມຄອງປ່າໄມ້ຕ້ອງສູ້ຊົນເພື່ອສ້າງຄວາມເຂັ້ມແຂງ ແລະ ສ້າງຄວາມຫຼາກຫຼາຍ ໃຫ້ເສດຖະກິດ ທ້ອງຖິ່ນເພື່ອ ຫຼີກລ້ຽງການຂຶ້ນກັບຜະລິດຕະພັນປ່າໄມ້ແບບດຽວ.

*<u>ຕົວຊີ້ບອກ:</u>*

*5.4.1 ການຄຸ້ມຄອງປ່າໄດ້ຮັບການເຜີຍແຜ່ຢູ່ໃນການສ້າງຜະລິດຕະພັນປ່າໄມ້ທີ່ຫຼາກຫຼາຍ (ໄມ້ ແລະເຄື່ອງປ່າຂອງດົງ, ລວມທັງຊະນິດທີ່ຮູ້ຈັກໜ້ອຍ) ແລະການບໍລິການ ລວມທັງການທ່ອງທ່ຽວ ແລະການພັກຜ່ອນຕາກອາກາດ. (ບໍ່ໃຊ້ໄດ້ກັບ SLIMF).*

*5.4.2 ການນຳໃຊ້ເຄື່ອງປ່າຂອງດົງໂດຍກິດຈະການຂອງຊຸມຊົນທ້ອງຖິ່ນໄດ້ຮັບການສົ່ງເສີມ ໃນບ່ອນທີ່ບໍ່ເຮັດໃຫ້ເກີດເປັນຜົນເສຍຕໍ່ກັບຈຸດປະສົງຂອງການຄຸ້ມຄອງອື່ນ.*

**ມາດຖານ 5.5** ກິດຈະການຄຸ້ມຄອງປ່າໄມ້ ຕ້ອງຮັບຮູ້, ຮັກສາ ແລະ ສົ່ງເສີມຄຸນຄ່າຂອງການບໍລິການ ແລະຊັບພະຍາກອນປ່າໄມ້ ບ່ອນໃດເຫັນວ່າເໝາະສົມ ເຊັ່ນ: ແຫຼ່ງນ້ຳ ແລະ ການປະມົງ.

*5.5.1 ຜູ້ຈັດການປ່າເອົາໃຈໃສ່ຂອບເຂດການບໍລິການ ແລະຊັບພະຍາກອນປ່າໄມ້ເຊັ່ນ: ອ່າງຮັບນ້ຳ ແລະການປະມົງ.*

*5.5.2 ພື້ນທີ່ອ່ອນໄຫວ ຫຼືພິເສດເຊັ່ນ: ອ່າງຮັບນ້ຳໄດ້ຮັບການພິຈາລະນາຢູ່ໃນການວາງແຜນການຄຸ້ມຄອງ ແລະການຈັດຕັ້ງປະຕິບັດ ແລະໄດ້ຮັບການອອກແບບຢູ່ໃນແຜນທີ່.*

*5.5.3 ມີບົດແນະນຳ ແລະມາດຕະການສຳລັບການປົກປ້ອງ ແລະການເພີ່ມຄວາມອຸດົມສົມບູນຂອງມູນຄ່າປ່າ ແລະການບໍລິການ ແລະພວກມັນໄດ້ຮັບການຈັດຕັ້ງປະຕິບັດ.*

*5.5.4 ກິດຈະກຳທາງດ້ານປ່າໄມ້ບໍ່ທຳລາຍແຫຼ່ງທີ່ຢູ່ອາໃສຂອງຊະນິດປາທີ່ມີຄວາມສຳຄັນທາງການຄ້າ ແລະວັດທະນະທຳຢູ່ພາຍໃນພື້ນທີ່ປ່າໄມ້ ແລະລຸ່ມນ້ຳ.*

**ມາດຖານ 5.6** ອັດຕາການຂຸດຄົ້ນຜະລິດຕະພັນໄມ້ອອກ ຕ້ອງບໍ່ເກີນລະດັບຄວາມຍືນຍົງຂອງປ່າ.

*<u>ຕົວຊີ້ບອກ:</u>*

*5.6.1 ການວາງແຜນການຕັດທີ່ອະນຸຍາດໄດ້ປະຈຳປີ (AAC) ແມ່ນໄດ້ຮັບການລະບຸຊັດເຈນຢູ່ໃນແຜນການຄຸ້ມຄອງປ່າ ແລະໄດ້ອີງໃສ່ວິທີການທີ່ໄດ້ຮັບຮອງ (ຕີພິມ) ແລະເປັນໄປຕາມຂຸດຈຸດປະສົງຂອງການຄຸ້ມຄອງ.*

*5.6.2 ລະດັບການຂຸດຄົ້ນທີ່ໄດ້ຄາດໄວ້ແມ່ນໄດ້ຮັບການພິຈາລະນາຢ່າງຊັດເຈນໃນດ້ານຜົນຜະລິດຂອງຜະລິດຕະພັນປ່າໄມ້ທີ່ຍືນຍົງຖາວອນ ເຊິ່ງແຜນການຄຸ້ມຄອງປ່າໄມ້ໄດ້ອີງໃສ່ນັ້ນ.*

*5.6.3 ບໍລິມາດທີ່ໄດ້ຂຸດຄົ້ນນັ້ນໄດ້ຮັບການຕິດຕາມ, ບັນທຶກເປັນເອກະສານ ແລະໄດ້ຮັບການເອົາໃຈໃສ່ຢູ່ໃນຂະບວນການວາງແຜນການ.*

*5.6.4 ການເກັບກູ້ເຄື່ອງປ່າຂອງດົງທີ່ໄດ້ຮັບອະນຸຍາດບໍ່ໃຫ້ເກີນກ່ວາອັດຕາການເກີດແທນທີ່ໄດ້ຄຳນວນໄວ້ໃນໄລຍະຍາວ.*

© 2005 GFA Consulting Group.  All rights reserved.

**ຫຼັກການ # 6:  ຜົນກະທົບສະພາບແວດລ້ອມ**
**ພະຍາກອນນໍ້າ, ດິນດ ທັດສະນີຍະພາບ ແລະ ລະບົບນິເວດທີ່ບອບບາງ ແລະ ເປັນເອກະລັກ. ແບບນັ້ນ ຈະເປັນ ການຮັກສາບົດບາດ ທາງດ້ານນິເວດວິທະຍາ ແລະ ຄວາມສົມບູນຂອງປ່າໄມ້.**

**ມາດຖານ 6.1** ການປະເມີນຜົນກະທົບດ້ານສິ່ງແວດລ້ອມ ຕ້ອງໃຫ້ສຳເລັດ ໂດຍເໝາະສົມກັບຂະໜາດ, ຄວາມລະອຽດຂອງການຄຸ້ມຄອງປ່າໄມ້ ແລະ ລັກສະນະເດັ່ນຂອງຊັບພະຍາກອນທີ່ຖືກຜົນກະທົບ ແລະ ໃຫ້ລວມເຂົ້າໃນລະ Assessment of environmental impacts shall be completed -- appropriate to the scale, intensity of forest management and the uniqueness of the affected resources -- and adequately integrated into management systems. Assessments shall include landscape level considerations as well as the impacts of on-site processing facilities. Environmental impacts shall be assessed prior to commencement of site-disturbing operations.

*<u>ຕົວຊີ້ບອກ:</u>*

***6.1.1*** *ລະບົບການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມເໝາະສົມຕໍ່ຂະໜາດ ແລະຄວາມຕັ້ງໃຈຂອງການຄຸ້ມຄອງປ່າໄມ້ ແລະຄວາມເປັນເອກະລັກສະເພາະຂອງຊັບພະຍາກອນທີ່ໄດ້ຮັບຜົນກະທົບນັ້ນໄດ້ຮັບການຈັດຕັ້ງປະຕິບັດ ແລະບັນທຶກເປັນເອກະສານໄວ້ກ່ອນເລີ່ມການດຳເນີນການໃດໜຶ່ງ (**SLIMF**: ກ່ອນເລີ່ມການດຳເນີນການໃດໜຶ່ງ, ໄດ້ມີການລະບຸຜົນກະທົບທາງລົບທີ່ອາດຈະເປັນໄປໄດ້ ແລະການດຳເນີນການແມ່ນໄດ້ອອກແບບເພື່ອຫຼຸດຜ່ອນໃຫ້ໜ້ອຍທີ່ສຸດ. ການປະເມີນແມ່ນບໍ່ຈຳເປັນຕ້ອງບັນທຶກເປັນເອກະສານໄວ້ນອກຈາກວ່າກົດໝາຍຮຽກຮ້ອງໃຫ້ເຮັດ).*

***6.1.2*** *ຜົນໄດ້ຮັບຂອງການປະເມີນເຫຼົ່ານີ້ແມ່ນໄດ້ຮັບການເອົາໃຈໃສ່ຢູ່ໃນການດຳເນີນການຕໍ່ມາ ແລະຖ້າມີຄວາມຈຳເປັນຕ້ອງໄດ້ເອົາເຂົ້າໃນຂະບວນການວາງແຜນການ.*

**Criterion 6.2** Safeguards shall exist which protect rare, threatened and endangered species and their habitats (e.g., nesting and feeding areas). Conservation zones and protection areas shall be established, appropriate to the scale and intensity of forest management and the uniqueness of the affected resources. Inappropriate hunting, fishing, trapping and collecting shall be controlled.

*<u>ຕົວຊີ້ບອກ:</u>*

***6.2.1*** *ຊະນິດພັນທີ່ຫາຍາກ, ໃກ້ຈະສູນພັນ ຫຼືຖືກຄຸກຄາມ ແລະແຫຼ່ງທີ່ຢູ່ອາໃສຂອງພວກມັນ (ຕົວຢ່າງ ພື້ນທີ່ບ່ອນເຮັດຮັງ ແລະໃຫ້ອາຫານ) ທີ່ມີຢູ່ ຫຼືອາດຈະມີຢູ່ໄດ້ຮັບການລະບຸ ແລະເຮັດເປັນແຜນທີ່ໄວ້ (**SLIMF**: ໃນບ່ອນທີ່ຮູ້ ໄດ້ມີການປົກປ້ອງຊະນິດພັນທີ່ຫາຍາກ ແລະໃກ້ຈະສູນພັນ).*

***6.2.2*** *ຂັ້ນຕອນດຳເນີນການເພື່ອປົກປ້ອງຊະນິດພັນດັ່ງກ່າວແມ່ນໄດ້ຮັບການບັນທຶກເປັນເອກະສານໄວ້ ແລະໄດ້ຮັບການຈັດຕັ້ງປະຕິບັດ (**SLIMF:** ຂັ້ນຕອນດຳເນີນການເພື່ອປົກປ້ອງຊະນິດພັນດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດ).*

***6.2.3*** *ເຂດອະນຸລັກ, ເຂດປົກປ້ອງ ແລະເຂດຮັກສາສັດປ່າໄດ້ຮັບການກຳນົດຂຶ້ນ ແລະປັກຫຼັກໝາຍເຂດຢູ່ໃນແຜນທີ່ ເໝາະສົມຕໍ່ກັບຂະໜາດ ແລະຄວາມຕັ້ງໃຈຂອງການຄຸ້ມຄອງປ່າໄມ້ ແລະຄວາມເປັນເອກະລັກຂອງຊັບພະຍາກອນທີ່ໄດ້ຮັບຜົນກະທົບ (ບໍ່ໃຊ້ໄດ້ກັບການດຳເນີນການຂອງ **SLIMF** ຢ່າງດຽວ).*

© 2005 GFA Consulting Group.  All rights reserved.

*6.2.4 ການຄັດເລືອກເຂດອະນຸລັກ ແລະເຂດປົກປ້ອງໄດ້ຮັບການພິຈາລະນາຕັດສິນໃນເງື່ອນໄຂທາງດ້ານທ່າແຮງຂອງພວກມັນ ເພື່ອເຮັດໃຫ້ເກີດມີການປະກອບສ່ວນສູງສຸດຕໍ່ກັບການຮັກສາ ແລະການເພີ່ມຄວາມອຸດົມສົມບູນຂອງຊີວະນາໆພັນ.*

*6.2.5 ການເຄື່ອນທີ່ຂອງຊະນິດພືດ ແລະສັດທີ່ສຳຄັນລະຫວ່າງເຂດອະນຸລັກ ແລະຂຸດຄົ້ນໄດ້ຮັບການເອົາໃຈໃສ່ໂດຍການຮັກສາເຂດຮັກສາປ່າທີ່ບໍ່ທັນຖືກຕັດ ໂດຍອີງໃສ່ດ້ານຕ່າງໆຂອງແຄມນ້ຳທີ່ເຊື່ອມຕໍ່ກັບຄວາມຄ້ອຍຊັນ ແລະຂ້າມສັນພູເພື່ອເຊື່ອມຕໍ່ກັບປ່າຜືນໃຫຍ່ ເຊິ່ງຈະບໍ່ຖືກຂຸດຄົ້ນ (ບໍ່ໃຊ້ໄດ້ກັບການດຳເນີນການຂອງ SLIMF ຢ່າງດຽວ).*

*6.2.6 ກິດຈະກຳການລ່າສັດ, ການຫາປາ, ການປ່ອຍໃຫ້ສັດກິນຫຍ້າ ແລະການເກັບກູ້ຕ່າງໆທີ່ໄດ້ຮັບອະນຸຍາດນັ້ນແມ່ນໄດ້ຮັບການຄຸ້ມຄອງ ເພື່ອຮັບປະກັນບໍ່ໃຫ້ພວກມັນເກີນກວ່າລະດັບທີ່ຍືນຍົງ.*

*6.2.7 ກິດຈະກຳທີ່ບໍ່ເໝາະສົມເຊັ່ນ: ການລ່າສັດ ແລະການດັກຈັບຊະນິດທີ່ໄດ້ຮັບການປົກປ້ອງທີ່ຜິດກົດໝາຍນັ້ນໄດ້ຮັບການປ້ອງກັນ.*

**ມາດຖານ 6.3** ຕ້ອງຮັກສາຄວາມສົມບູນ, ສົ່ງເສີມ ຫຼື ຟື້ນຟູຄືນ ຄຸນຄ່າ ແລະ ບົດບາດທາງນິເວດວິທະຍາລວມມີ:

ກ) ການສືບທອດ ແລະ ການຟື້ນຟູປ່າ

ຂ) ຄວາມຫຼາກຫຼາຍດ້ານ ພັນທຸກຳ, ຊະນິດພັນ ແລະ ລະບົບນິເວດວິທະຍາ

ຄ) ຮອບວຽນທາງທຳມະຊາດ ທີ່ມີຜົນຕໍ່ຜະລິດຕະຜົນຂອງລະບົບນິເວດວິທະຍາ

*<u>ຕົວຊີ້ບອກ:</u>*

*6.3.1 ລະບົບການຮັກສາປ່າປູກທີ່ໄດ້ຍອມຮັບນັ້ນເໝາະສົມກັບນິເວດວິທະຍາຂອງປ່າ.*

*6.3.2 ລະບົບທີ່ໃຊ້ພື້ນທີ່ຕັດທີ່ໜ້ອຍ, ການໃຫ້ລົ້ມລົງແບບທີ່ມີການຄັດເລືອກ ແລະກຳນົດປະເພດອາຍຸຕ່າງໆໄດ້ຮັບການພິຈາລະນາ*

*6.3.3 ຖ້າມີຄວາມເໝາະສົມຕໍ່ກັບລະບົບປ່າປູກ, ການດຳເນີນການທາງດ້ານປ່າໄມ້ຈະຕ້ອງເລັງໃສ່ການປະສົມຂອງສ່ວນຕ່າງໆທີ່ແຕກຕ່າງກັນທາງດ້ານຂະໜາດ, ຮູບຮ່າງ, ຊະນິດ ແລະວັນທີຂອງການປູກ ແລະການໃຫ້ລົ້ມລົງໃຫ້ປະສົມກົມກືນກັບສະພາບພື້ນທີ່.*

*6.3.4 ຂະໜາດຂອງການໃຫ້ລົ້ມລົງ (ຕົວຢ່າງ ຂະໜາດຂອງລົດເກັງນ້ອຍ) ແມ່ນໄດ້ສັດສ່ວນກັບພະລັງທາງທຳມະຊາດຂອງປະເພດປ່າ ແລະພື້ນທີ່ພາຍໃຕ້ການພິຈາລະນາ (ນອກຈາກວ່າໄດ້ມີການໃຫ້ເຫດຜົນຂອງປ່າປູກທີ່ຖືກຕ້ອງຊັດເຈນ).*

*6.3.5 ການໃຫ້ລົ້ມລົງຕາມການເລືອກ ແລະການຮັກສາດ້ວຍການຕັດຮອບໄດ້ຮັບການອອກແບບເພື່ອຮັກສາຄວາມຫຼາກຫຼາຍທາງດ້ານຊະນິດພັນ.*

*6.3.6 ຊີວະນາໆພັນໄດ້ຮັບການຮັກສາເປັນປົກກະຕິໂດຍການຮັກສາແຫຼ່ງທີ່ຢູ່ອາໃສໃນບ່ອນທີ່ສຳຄັນ ຕົວຢ່າງ ປ່າຊຽວຕາມແຄມນ້ຳ, ປ່າຊຽວຕາມປ່າຫີນ, ໜອງບຶງ ແລະທົ່ງຫຍ້າ.*

*6.3.7 ແຫຼ່ງທີ່ຢູ່ອາໃສບ່ອນທີ່ມີໄມ້ຢືນຕົ້ນ ແລະໄມ້ນອນຂອນຕາຍຈະຕ້ອງໄດ້ຮັບການຮັກສາໃນລະດັບທີ່ເໝາະສົມ.*

**ມາດຖານ 6.4** ຕົວຢ່າງທີ່ເປັນຕົວແທນຂອງລະບົບນິເວດທີ່ມີຢູ່ໃນຂົງເຂດ ຕ້ອງໄດ້ຮັບການປ້ອງກັນໃຫ້ຢູ່ສະພາບເດີມຂອງມັນ ແລະ ໝາຍເຂົ້າໃນແຜນທີ່ໃຫ້ເໝາະສົມກັບຂະໜາດ ແລະ ຄວາມລະອຽດຂອງ ການດຳ ເນີນງານ ແລະ ເອກະລັກຂອງຊັບພະຍາກອນທີ່ຖືກຜົນກະທົບ.

© 2005 GFA Consulting Group.  All rights reserved.



*ຕົວຊີ້ບອກ:*

**6.4.1** *ຕົວຢ່າງທີ່ເປັນຕົວແທນໃຫ້ກັບລະບົບນິເວດທີ່ມີຢູ່ພາຍໃນສະພາບການຂອງດິນໄດ້ຮັບການປົກປ້ອງຢູ່ໃນສະພາບທຳມະຊາດຂອງພວກມັນ ແລະບັນທຶກໄວ້ໃນແຜນທີ່, ເໝາະສົມຕໍ່ກັບຂະໜາດ ແລະຄວາມຕັ້ງໃຈຂອງການດຳເນີນງານ ແລະຄວາມເປັນເອກະລັກຂອງຊັບພະຍາກອນທີ່ໄດ້ຮັບຜົນກະທົບ (**SLIMF**: ໃນບ່ອນທີ່ຮູ້ຈັກວ່າຕົວຢ່າງທີ່ເປັນຕົວແທນຂອງລະບົບນິເວດມີຢູ່ໃນ FMU ສິ່ງເຫຼົ່ານີ້ຈະໄດ້ຮັບການປົກປ້ອງ).*

**ມາດຖານ 6.5** ຕ້ອງກະກຽມ ແລະ ຈັດຕັ້ງປະຕິບັດແນະນຳເພື່ອ: ຄວບຄຸມການເຊາະເຈື່ອນ, ລຸດຜ່ອນຜົນ ເສັຍຫາຍຂອງ ປ່າໄມ້ໃນຍະຂຸດຄົ້ນ, ສ້າງທາງ ແລະ ການລົບກວນທາງກົນຈັກອື່ນໆ ແລະ ເພື່ອປ້ອງກັນຊັບພະຍາກອນນ້ຳ.

*ຕົວຊີ້ບອກ:*

**6.5.1** ***ມີ**ບົດແນະນຳໃນທ້ອງຖິ່ນທີ່ເໝາະສົມກ່ຽວກັບການເກັບກູ້ ແລະການກໍ່ສ້າງຖະໜົນທີ່ບັນລຸໄດ້ຕາມຄວາມຕ້ອງການໃນການປະຕິບັດດີທີ່ສຸດໃນລະດັບຊາດ ຫຼືລະດັບພາກ (ຕົວຢ່າງ ຕົວແບບຂອງ FAO ກ່ຽວກັບກົດລະບຽບຂອງການປະຕິບັດການຂຸດຄົ້ນປ່າໄມ້) ໃຫ້ກັບຜູ້ຈັດການ ແລະຫົວໜ້າປ່າໄມ້ (**SLIMF**: ການດຳເນີນການຄຸ້ມຄອງປ່າໄມ້ທັງໝົດທີ່ອາດຈະສ້າງຜົນເສຍຫາຍກັບດິນປູກຝັງ (ຕົວຢ່າງ ການອັດແໜ້ນ, ການເຊາະເຈື່ອນ) ແລະວິທີການທີ່ຈະຫຼຸດຜ່ອນ ຫຼືຫຼີກເວັ້ນສິ່ງດັ່ງກ່າວນັ້ນເປັນທີ່ຮູ້ຈັກ) .*

**6.5.2** *ບົດແນະນຳໄດ້ສ້າງຂຶ້ນຢູ່ໃນເງື່ອນໄຂຂອງຕົວຊີ້ບອກ 6.5.1 ໄດ້ຮັບການຈັດຕັ້ງປະຕິບັດໃນລະຫວ່າງການດຳເນີນການ ແລະການວາງແຜນ.*

**6.5.3** *ເຂດກັນຊົນໄດ້ຮັບການຮັກສາຕາມແມ່ນ້ຳ ແລະບໍລິເວນຕົວແມ່ນ້ຳ. ເຂດກັນຊົນເຫຼົ່ານີ້ໄດ້ຮັບການປັກຫຼັກໝາຍຢູ່ໃນແຜນທີ່ ແລະເປັນໄປຕາມບັນດາຂໍ້ກຳນົດມາດຖານທີ່ໄດ້ກຳນົດໄວ້ໃນບົດແນະນຳການປະຕິບັດທີ່ດີສຸດຢູ່ໃນລະດັບຊາດ ແລະລະດັບພາກ (ຕົວຢ່າງ ຕົວແບບຂອງ FAO ກ່ຽວກັບກົດລະບຽບຂອງການປະຕິບັດການຂຸດຄົ້ນປ່າໄມ້).*

**6.5.4** *ຜູ້ປະຕິບັດການເອົາໃຈໃສ່ ແລະສາມາດຈັດຕັ້ງປະຕິບັດຂະບວນດຳເນີນການສຸກເສີນທີ່ພຽງພໍ ເພື່ອເຮັດການອະນາໄມນ້ຳມັນ ແລະສານເຄມີຮົ່ວໄຫຼຫຼັງຈາກເກີດອຸປະຕິເຫດ.*

**6.5.5** *ບໍ່ມີມົນລະພິດຢູ່ໃນນ້ຳບໍລິເວນໃກ້ຄຽງ ພ້ອມກັບບໍ່ມີການເພີ່ມຂຶ້ນຂອງຕະກອນທີ່ເກີດມາຈາກການດຳເນີນການຂຸດຄົ້ນໄມ້.*

**6.5.6** *ນະໂຍບາຍ ແລະຂັ້ນຕອນດຳເນີນການກວມເອົາບັນທັດຖານຕໍ່ໄປນີ້ທີ່ໄດ້ຮັບການຈັດຕັ້ງປະຕິບັດ: ພື້ນທີ່ປົກປ້ອງໄດ້ຮັບການປັກຫຼັກໝາຍຊາຍແດນ ຢ່າງໜ້ອຍກໍ່ເປັນການຊົ່ວຄາວ ກ່ອນເລີ່ມການດຳເນີນການປ່າໄມ້ຢູ່ໃນດິນທີ່ໃກ້ຄຽງ*

*- ເຄື່ອງຈັກເກັບກູ້ຈະຕ້ອງບໍ່ເຂົ້າໄປຫາແມ່ນຳ ຍົກເວັ້ນແຕ່ບ່ອນທີ່ໃຊ້ຂ້າມນ້ຳທີ່ໄດ້ອະນຸຍາດ ແລະໄດ້ອອກແບບໄວ້*

*- ບໍ່ຄວນຖິ້ມກິ່ງໄມ້ ແລະຍອດໄມ້ທີ່ຕັດລົງສູ່ແມ່ນ້ຳ*

*- ຢຸດເຊົາການຂຸດຄົ້ນແມື່ອດິນມີນ້ຳອີ່ມຕົວ*

*- ການໃຊ້ແຜ່ນຮອງໄດ້ຮັບການລະບຸ ເມື່ອມີຄວາມຈຳເປັນ.*

**6.5.7** *ການຂຸດຄົ້ນໄມ້ທັງໝົດໄດ້ດຳເນີນການຕາມຄຳແນະນຳທີ່ໄດ້ວາງແຜນໄວ້.*

**6.5.8** *ກຳມະກອນໄດ້ຮັບການຝຶກອົບຮົມພຽງພໍໃນດ້ານວິທີການຂຸດຄົ້ນ. ສຳລັບ FMEs ຂະໜາດໃຫຍ່ (> 10.000 ha) ຈະຕ້ອງມີໂຄງການຝຶກອົບຮົມເປັນລາຍລັກອັກສອນ ແລະບັນທຶກການຝຶກອົບຮົມ.*

© 2005 GFA Consulting Group.  All rights reserved.



**ມາດຖານ 6.6** ລະບົບການຈັດສັນຄຸ້ມຄອງ ຕ້ອງສົ່ງເສີມກສນພັດທະນາ ແລະ ການນໍາໃຊ້ວິທີການທີ່ບໍ່ ແມ່ນທາງເຄມີ ສໍາຫຼັບປາບສັດຕູພືດ ແລະ ຕ້ອງພະຍາຍາມຫຼີກລ້ຽງ ການໃຊ້ຢາຂ້າສັດຕູພືດທີ່ເປັນເຄມີ. ຫ້າມນໍາໃຊ້ ຢາຂ້າສັດຕູພືດ ຊະນິດ 1A ແລະ 1B ລະບຸໂດຍອົງການອະນາໄມໂລກ, ຢາຂ້າສັດຕູພືດທີ່ເປັນພິດ ຫຼື ມີສານ ຕົກຄ້າງທີ່ເຂັ້ມຂຸ້ນ ແລະ ສະສົມໃນຕ່ອງໂສ້ອາຫານເກີນປົກກະຕິ ຕະຫຼອດທັງ ຢາຂ້າສັດຕູພືດທີ່ເກືອດຫ້າມໂດຍ ຂໍ້ຕົກລົງຂອງສາກົນ. ຖ້າມີການນໍາໃຊ້, ກໍຕ້ອງໄດ້ມີອຸປະກອນ ແລະ ມີການຝຶກອົບຮົມເພື່ອຫຼຸດຜ່ອນ ຄວາມສ່ຽງຕໍ່ສຸຂະພາບ ແລະ ທາງສະພາບແວດລ້ອມ.

<u>*ຕົວຊີ້ບອກ:*</u>

***6.6.1**. ມີຍຸດທະສາດການຄວບຄຸມສັດຕູພືດ, ພະຍາດ ແລະວັດຊະພືດຢູ່ພ້ອມ.*

***6.6.2** ໃຊ້ສານເຄມີພຽງແຕ່ເມື່ອມີຄວາມຈໍາເປັນອີຫຼີ ເພື່ອໃຫ້ບັນລຸໄດ້ຕາມເປົ້າໝາຍການຄຸ້ມຄອງທີ່ໄດ້ກໍານົດ. ໃຊ້ສານເຄມີສັງເຄາະພຽງແຕ່ເມື່ອບໍ່ຮູ້ຈັກທາງເລືອກໃນການທີ່ບໍ່ໃຊ້ສານເຄມີ ທີ່ບໍ່ນໍາໄປສູ່ຄ່າໃຊ້ຈ່າຍເກີນຂະໜາດ.*

***6.6.3** ມີບັນຊີຢາປາບສັດຕູພືດທີ່ໃຊ້ປະຈຸບັນທັງໝົດຢູ່ໃນອົງການຈັດຕັ້ງທີ່ມີເອກະສານບັນທຶກຊື່ການຄ້າ ແລະສານອອກລິດ. ໃນບ່ອນທີ່ບໍ່ມີກາໝາຍຜະລິດຕະພັນ, ການອະນຸຍາດໃຫ້ນໍາໃຊ້, ວິທີການ ແລະອັດຕານໍາໃຊ້ ກໍ່ແມ່ນຈະຕ້ອງໄດ້ເຮັດເປັນເອກະສານຄືກັນ.*

***6.6.4** ບໍ່ມີການນໍາໃຊ້ສານປາບສັດຕູພືດທີ່ຕ້ອງຫ້າມ, ຍົກເວັ້ນແຕ່ໃນບ່ອນທີ່ໄດ້ຮັບການອະນຸຍາດກ່ຽວກັບສັດຕູພືດຈາກເລຂາທິການ FSC ຫຼືໄດ້ຮັບການຍົກເວັ້ນສຸກເສີນໂດຍທາງ GFA ກ່ອນໃຊ້.*

***6.6.5** ການໃຊ້ສານເຄມີ (arboricides, ຢາຂ້າແມງໄມ້, ຢາຂ້າຫຍ້າ, ອື່ນ) ແມ່ນຖືກຄວບຄຸມຢ່າງເຄັ່ງຄັດ.*

***6.6.6** ຖ້າມີການໃຊ້ສານເຄມີ, ໄດ້ນໍາໃຊ້ອຸປະກອນທີ່ເໝາະສົມສໍາລັບການນໍາໃຊ້ ແລະໄດ້ມີການຝຶກພະນັກງານຢ່າງເໝາະສົມ.*

***6.6.7** ໄດ້ມີການຫ້າມການໃຊ້ສານເຄມີຢູ່ພາຍໃນໄລຍະ 10 m ຂອງແມ່ນ້ໍາ ແລະ ໄລຍະ 30 m ອ້ອມອ່າງເກັບນ້ໍາ ແລະໜອງບຶງ.*

***6.6.8** ໄດ້ມີການຫ້າມການນໍາໃຊ້ ຖ້າຄາດວ່າຈະມີຝົນຕົກໜັກ, ໃນລະຫວ່າງຊ່ວງອາກາດຊື້ນ, ພື້ນດິນທີ່ປົກຄຸມດ້ວຍຫິມະແຂງ ຫຼືພື້ນດິນທີ່ຖືກອົບໃຫ້ແຫ້ງໃນໄລຍະແຫ້ງແລ້ວ.*

***6.6.9** ການເກັບມ້ຽນ ແລະການຖືສານເຄມີປະຕິບັດຕາມບົດແນະນໍາຫຼ້າສຸດກ່ຽວກັບຄວາມປອດໄພ ແລະສຸຂະພາບ.*

**ມາດຖານ 6.7** ທາດເຄມີ, ສິ່ງບັນຈຸ, ສິ່ງເສດເຫຼືອ ທີ່ບໍ່ແມ່ນອິນຊີວັດຖຸປ◌ັນຂອງແຫຼວ ແລະ ຂອງແຂງ ລວມທັງນ້ໍາມັນ ແລະ ເຊື້ອເພີງ ຕ້ອງຖືກຈັດການໃນລັກສະນະທີ່ເໝາະສົມທາງສະພາບແວດລ້ອມໃນສະຖານທີ່ນອກເຂດ.

<u>*ຕົວຊີ້ບອກ:*</u>

***6.7.1** ມີບົດແນະນໍາອະທິບາຍເຖິງການນໍາໃຊ້ ແລະການກໍາຈັດສານເຄມີ, ພາຊະນະບັນຈຸ, ຂອງເສຍທີ່ເປັນຂອງແຫຼວ ແລະຂອງແຂງທີ່ບໍ່ແມ່ນສານອິນຊີ ແລະໄດ້ຮັບການຈັດຕັ້ງປະຕິບັດ.*

***6.7.2** ພະນັກງານມີຄວາມຮັບຜິດຊອບຕໍ່ການກໍາຈັດຂອງເສຍທີ່ເໝາະສົມກັບສະພາບແວດລ້ອມ.*

***6.7.3** ໃຫ້ຄວາມສໍາຄັນກັບການນໍາໃຊ້ນ້ໍາມັນ ແລະນ້ໍາມັນຫຼໍ່ລື່ນທີ່ເປັນມິດກັບສິ່ງແວດລ້ອມ.*

***6.7.4** ທີ່ດິນ ແລະນ້ໍາໄດ້ຮັບການປົກປ້ອງບໍ່ໃຫ້ມີມົນລະພິດ.*

***6.7.5** ໄດ້ເຮັດການກໍາຈັດຂອງເສຍທີ່ຖືກຕ້ອງຈາກອຸປະກອນ ແລະວັດສະດຸຕ່າງໆ.*

© 2005 GFA Consulting Group.  All rights reserved.

**ມາດຖານ 6.8** ການນຳໃຊ້ຕົວຄວບຄຸມທາງຊີວະພາບ ຕ້ອງເຮັດເປັນເອກະສານອ້າງອີງ, ລຸດຜ່ອນ, ຕິດຕາມກວດກາ ແລະ ຄວບຄຸມຢ່າງເຄັ່ງຄັດ ໂດຍໃຫ້ສອດຄ່ອງກັບກົດໝາຍຂອງຊາດ ແລະ ສົນທິສັນຍາທາງ ວິທະຍາສາດ ທີ່ຖືກຮັບຮອງແລ້ວທາງສາກົນ. ຫ້າມນຳໃຊ້ອິນຊີວັດຖຸທີ່ໄດ້ພັນທຸກຳແລ້ວ (GMO).

<u>ຕົວຊີ້ບອກ:</u>

*6.8.1 ມີຂັ້ນຕອນດຳເນີນການ ແລະໄດ້ຮັບການຈັດຕັ້ງປະຕິບັດ ເພື່ອເຮັດການບັນທຶກ ແລະຕິດຕາມທຸກການນຳໃຊ້ສານຄວບຄຸມທາງຊີວະວິທະຍາ.*

*6.8.2 ການນຳໃຊ້ສານຄວບຄຸມທາງດ້ານຊີວະວິທະຍາໄດ້ຮັບການຫຼີກເວັ້ນ ຫຼືມີໜ້ອຍທີ່ສຸດ ໂດຍການນຳໃຊ້ວິທີການຄວບຄຸມທາງເລືອກທີ່ມີຢູ່ດີທີ່ສຸດ ເຊິ່ງບໍ່ເຮັດໃຫ້ມີຄ່າໃຊ້ຈ່າຍເກີນຂະໜາດ.*

*6.8.3 ບໍ່ໃຫ້ໃຊ້ຈີເອັມໂອ (genetically modified organisms), ລວມທັງສິ່ງທີ່ຈະນຳໃຊ້ປູກ ແລະສານຄວບຄຸມທາງດ້ານຊີວະວິທະຍາ.*

**ມາດຖານ 6.9** ການນຳໃຊ້ຊະນິດພັນຕ່າງຖິ່ນ ຕ້ອງໄດ້ຄວບຄຸມຢ່າງລະມັດລະວັງ ແລະ ຕິດຕາມກວດກາເປັນປະຈຳ ເພື່ອຫຼີກລ້ຽງຜົນກະທົບທາງນິເວດວິທະຍາ.

<u>ຕົວຊີ້ບອກ:</u>

*6.9.1 ການນຳໃຊ້ຊະນິດຈາກຕ່າງຖິ່ນແມ່ນຈະຕ້ອງໄດ້ມີເຫດຜົນອັນຖືກຕ້ອງໃນແຕ່ລະກໍລະນີ.*

*6.9.2 ຊະນິດຈາກຕ່າງຖິ່ນທີ່ໃຊ້ໃນຂະໜາດເພື່ອການຄ້າແມ່ນຈະຕ້ອງບໍ່ເຮັດໃຫ້ມີຜົນຮ້າຍແຮງເສຍຫາຍຕໍ່ສະພາບແວດລ້ອມ ຫຼືຜົນກະທົບທີ່ເປັນຜົນເສຍຕໍ່ສະພາບທີ່ດິນອ້ອມຂ້າງ ແລະອົງປະກອບທາງດ້ານຊະນິດຕາມທຳມະຊາດ.*

*6.9.3 ມີການຕິດຕາມການນຳໃຊ້ຊະນິດຈາກຕ່າງຖິ່ນຢ່າງຕັ້ງໜ້າ ເພື່ອຫຼີກເວັ້ນຜົນກະທົບທາງດ້ານນິເວດທີ່ເປັນໄພເຊັ່ນ: ການເກີດຂຶ້ນມາໃໝ່ໂດຍທີ່ບໍ່ໄດ້ຕ້ອງການ.*

**ມາດຖານ 6.10** ບໍ່ຄວນໃຫ້ມີການຫັນປ່ຽນເນື້ອທີ່ປ່າໄມ້ ໄປເຮັດສວນປູກໄມ້ ຫຼື ໄປສູ່ຈຸດປະສົງອື່ນ, ຍົກເວັ້ນແຕ່ກໍລະນີທີ່ ການຫັນປ່ຽນດັ່ງກ່າວແມ່ນເພື່ອ:

ກ) ເຮັດພຽງແຕ່ສ່ວນນ້ອຍໜຶ່ງ ຂອງເຂດຈັດສັນຄຸ້ມຄອງປ່າ, ແລະ

ຂ) ບໍ່ແມ່ນຢູ່ໃນເຂດທີ່ປ່າໄມ້ທີ່ມີຄຸນຄ່າສູງຕໍ່ການອະນຸລັກ, ແລະ

ຄ) ຈະສາມາດໃຫ້ປະໂຫຍດແກ່ການອະນຸລັກໃນໄລຍະຍາວ, ໝັ້ນຄົງ, ເພີ່ມເຕີມ ແລະ ເປັນແກ່ນສານຕໍ່ໜ່ວຍງານຄຸ້ມຄອງປ່າ.

<u>ຕົວຊີ້ບອກ:</u>

*6.10.1 ການປ່ຽນປ່າໄມ້ເປັນສວນປູກໄມ້ ຫຼືການໃຊ້ທີ່ດິນບໍ່ມີປ່າໄມ້ບໍ່ເກີດຂຶ້ນ, ຍົກເວັ້ນໃນສະພາບບ່ອນການຫັນປ່ຽນນັ້ນ:*

*ກ) ຈຳເປັນຕ້ອງໃຫ້ໃນສ່ວນທີ່ຈຳກັດຫຼາຍຂອງໜ່ວຍງານຄຸ້ມຄອງປ່າໄມ້; ແລະ*

*ຂ) ບໍ່ເກີດຂຶ້ນໃນພື້ນທີ່ປ່າໄມ້ທີ່ມີຄ່າທາງດ້ານການອະນຸລັກສູງ; ແລະ*

*ຄ) ຈະສາມາດເຮັດໃຫ້ມີຜົນປະໂຫຍດອັນຊັດເຈນ, ສຳຄັນ, ເພີ່ມເຕີມ, ຮັບປະກັນໃນການອະນຸລັກໄລຍະຍາວໃນທົ່ວໜ່ວຍງານຄຸ້ມຄອງປ່າໄມ້.*

## ຫຼັກການ # 7: ແຜນຈັດສັນຄຸ້ມຄອງ

© 2005 GFA Consulting Group. All rights reserved.

ຕ້ອງຂຽນແຜນຈັດສັນຄຸ້ມຄອງທີ່ເໝາະສົມກັບຂະໜາດ ແລະ ຄວາມລະອຽດ ຂອງການດຳເນີນງານ, ຈັດຕັ້ງປະຕິບັດ, ແລະ ປັບປຸງຂໍ້ມູນໃຫ້ໃຊ້ໄດ້. ຈຸດປະສົງໃນໄລຍະຍາວຂອງການຈັດສັນຄຸ້ມຄອງ ແລະ ວິທີການທີ່ຈະບັນລຸຜົນສຳເລັດ ຕ້ອງໄດ້ກຳນົດໄວ້ຟ່າງຈະແຈ້ງ.

**ມາດຖານ 7.1** ສະໜອງແຜນຈັດສັນຄຸ້ມຄອງ ແລະ ເອກະສານອ້າງອີງເພື່ອສະໜັບສະໜູນ:

ກ) ຈຸດປະສົງຂອງການຈັດສັນ.

ຂ) ອະທິບາຍ ກ່ຽວກັບຊັບພະຍາກອນປ່າໄມ້ທີ່ຈະຄຸ້ມຄອງ, ຂໍ້ຂອບເຂດທາງສິ່ງແວດລ້ອມ, ການນຳໃຊ້ທີ່ດິນ ແລະ ການເປັນເຈົ້າຂອງ, ເງື່ອນໄຂທາງເສດຖະກິດ-ສັງຄົມ ແລະ ຂໍ້ມູນທີ່ດິນໃນເຂດໃກ້ຄຽງ.

ຄ) ອະທິບາຍ ກ່ຽວກັບລະບົບວະນະວັດ ແລະ/ ຫຼື ການຈັດສັນຄຸ້ມຄອງ ໂດຍອີງໃສ່ ນິເວດວິທະຍາ ຂອງປ່າ ແລະ ຂໍ້ມູນໄດ້ຈາກການສຳຫຼວດຊັບພະຍາກອນ.

ງ) ເຫດຜົນໃນການກຳນົດ ອັດຕາ ການຂຸດຄົ້ນປະຈຳປີ ແລະ ການເລືອກຊະນິດພັນ.

ຈ) ການກຳນົດໃນການຕິດຕາມກວດກາການປ່ຽນແປງ ແລະ ການຈະເລີນເຕີບໂຕຂອງປ່າ.

ສ) ການຮັກສາຄວາມປອດໄພດ້ານສິ່ງແວດລ້ອມ ຕ້ອງອີງໃສ່ການປະເມີນຜົນຕ່າງໆດ້ານສິ່ງແວດລ້ອມ.

ຊ) ວາງແຜນສຳຫຼັບກຳນົດ ແລະ ປ້ອງກັນຊະນິດພັນທີ່ຫາຍາກ, ໃກ້ຈະສູນພັນ ແລະ ໄດ້ຮັບໄພຂົ່ມຂູ່.

ຍ) ສ້າງແຜນທີ່ ອະທິບາຍເຖິງຖານຊັບພະຍາກອນປ່າໄມ້ ລວມມີເນື້ອທີ່ປ້ອງກັນ, ກິດຈະກຳ ການຈັດສັນຄຸ້ມຄອງທີ່ໄດ້ວາງແຜນໄວ້ແລ້ວ ແລະ ກຳມະສິດທີ່ດິນ.

ດ) ອະທິບາຍ ແລະ ໃຫ້ເຫດຜົນກ່ຽວກັບເຕັກນິກການຂຸດຄົ້ນ ແລະ ອຸປະກອນທີ່ຈະນຳໃຊ້.

*ຕົວຊີ້ບອກ:*

*7.1.1 ແຜນການຄຸ້ມຄອງໃຫ້ຂໍ້ມູນກ່ຽວກັບຈຸດປະສົງຂອງການຄຸ້ມຄອງ.*

*7.1.2 ແຜນການຄຸ້ມຄອງໃຫ້ການບັນຍາຍເຖິງຊັບພະຍາກອນປ່າໄມ້ທີ່ຈະຖືກຄຸ້ມຄອງ, ຂໍ້ຈຳກັດທາງດ້ານສິ່ງແວດລ້ອມ, ສະຖານະພາບການນຳໃຊ້ທີ່ດິນ ແລະຄວາມເປັນເຈົ້າຂອງ, ເງື່ອນໄຂທາງດ້ານເສດຖະກິດ-ສັງຄົມ, ແລະລັກສະນະຂອງທີ່ດິນຢູ່ໃກ້ຄຽງ.*

*7.1.3 ແຜນການຄຸ້ມຄອງໃຫ້ການບັນຍາຍເຖິງລະບົບການຄຸ້ມຄອງປ່າປູກ ແລະ/ຫຼືປ່າອື່ນໆ ອີງຕາມນິເວດວິທະຍາຂອງປ່າໄມ້ທີ່ກຳລັງກ່າວເຖິງ ແລະຂໍ້ມູນທີ່ເກັບໄດ້ຜ່ານທາງບັນຊີລາຍການຊັບພະຍາກອນ.*

*7.1.4 ແຜນການຄຸ້ມຄອງໃຫ້ເຫດຜົນຄວາມເປັນມາສຳລັບອັດຕາການຂຸດຄົ້ນປະຈຳປີ ແລະການຄັດເລືອກຊະນິດ.*

*7.1.5 ແຜນການຄຸ້ມຄອງໃຫ້ເຫັນການຈັດໃຫ້ມີການຕິດຕາມການເຕີບໂຕ ແລະສະພາບການເຄື່ອນເໜັງຂອງປ່າໄມ້.*

*7.1.6 ແຜນການຄຸ້ມຄອງໃຫ້ການປົກປ້ອງສິ່ງແວດລ້ອມອີງຕາມການປະເມີນທາງດ້ານສິ່ງແວດລ້ອມ.*

*7.1.7 ແຜນການເພື່ອການກຳນົດ ແລະປົກປ້ອງຊະນິດທີ່ຫາຍາກ, ຖືກຄຸກຄາມ ແລະໃກ້ຈະສູນພັນ.*

*7.1.8 ແຜນທີ່ອະທິບາຍເຖິງຖານຊັບພະຍາກອນປ່າໄມ້, ລວມທັງພື້ນທີ່ໄດ້ຮັບການປົກປ້ອງ, ກິດຈະກຳການຄຸ້ມຄອງທີ່ໄດ້ວາງແຜນໄວ້ ແລະຄວາມເປັນເຈົ້າຂອງທີ່ດິນ.*

*7.1.9 ຄຳອະທິບາຍ ແລະເຫດຜົນຂອງເຕັກນິກ ແລະອຸປະກອນການຂຸດຄົ້ນທີ່ຈະນຳໃຊ້.*

**ມາດຖານ 7.2** ແຜນການຈັດສັນຄຸ້ມຄອງຕ້ອງໄດ້ຮັບການທົດທວນ ໃນແຕ່ລະໄລຍະ ເພື່ອນຳເອົາຜົນຂອງການປະເມີນຜົນ ແລະຂໍ້ມູນທາງວິຊາການ ແລະ ວິທະຍາສາດໃໝ່ໆເຂົ້ານຳ ຕະຫຼອດ ເພື່ອຕອບຮັບການປ່ຽນແປງທາງດ້ານສິ່ງແວດລ້ອມ, ເສດຖະກິດ ແລະ ສັງຄົມ.

*ຕົວຊີ້ບອກ:*

*7.2.1 ມີຂັ້ນຕອນດຳເນີນການສຳລັບການດັດແກ້ ແລະການອັບເດດແຜນການຄຸ້ມຄອງປົກກະຕິ.*

© 2005 GFA Consulting Group.  All rights reserved.

*7.2.2 ຢູ່ໃນການດັດແກ້ແຜນການຄຸ້ມຄອງທີ່ກ່ຽວຂ້ອງກັບຄຳຄິດເຫັນຂອງສະຖາບັນຄົ້ນຄວ້າ, ອົງການຈັດຕັ້ງທາງດ້ານສິ່ງແວດລ້ອມ ແລະອົງການຈັດຕັ້ງທາງສັງຄົມທີ່ບໍ່ຂຶ້ນກັບລັດຖະບານຄວນໄດ້ຮັບການພິຈາລະນາ.*

*7.2.3 ມີຫຼັກຖານທີ່ປັບປຸງແປງຜົນຕອບແທນທາງດ້ານສິ່ງແວດລ້ອມ, ສັງຄົມ ແລະເສດຖະກິດໄດ້ເອົາລວມເຂົ້າໄວ້ໃນການດັດແກ້ແຜນການຄຸ້ມຄອງ.*

*7.2.4 ມີວິທີການເພື່ອປະເມີນຜົນການພັດທະນາທາງດ້ານວິທະຍາສາດ ແລະເຕັກນິກອັນໃໝ່ ເພື່ອການລວມເຂົ້າກັບແຜນການຄຸ້ມຄອງທີ່ໄດ້ຮັບການດັດແກ້.*

*7.2.5 ແຜນດຳເນີນງານປະຈຳປີທີ່ມີແຜນທີ່ນັ້ນມີຢູ່ ແລະສອດຄ່ອງກັບແຜນການຄຸ້ມຄອງປ່າໄມ້ທີ່ໄດ້ຮັບອະນຸມັດ.*

**ມາດຖານ** 7.3 ກຳມະກອນປ່າໄມ້ ຕ້ອງໄດ້ຮັບການຝຶກອົບຮົມ ແລະ ການຊີ້ນຳ ເພື່ອຮັບປະກັນໃນການ ຈັດຕັ້ງປະຕິບັດ ແຜນການຈັດສັນຄຸ້ມຄອງໃຫ້ຖືກຕ້ອງ.

*ຕົວຊີ້ບອກ:*

*7.3.1 ໄດ້ມີການສະໜອງ ແລະໃຫ້ການຊ່ວຍເຫຼືອດ້ານການຝຶກອົບຮົມເພີ່ມເຕີມພິເສດທາງດ້ານນິເວດວິທະຍາ ແລະເຕັກນິກການຄຸ້ມຄອງປ່າໄມ້.*

*7.3.2 ພະນັກງານປ່າໄມ້ໄດ້ຖືກນຳເຂົ້າເຮັດໜ້າທີ່ຂອງເຂົາເຈົ້າຢ່າງທົ່ວເຖິງ.*

*7.3.3 ພະນັກງານປ່າໄມ້ຮູ້ຈັກຈຸດປະສົງຂອງການຄຸ້ມຄອງປ່າໄມ້.*

*7.3.4 ຜູ້ຈັດການປ່າໄມ້ໄດ້ມີການກວດກາເບິ່ງວຽກຂອງພະນັກງານປ່າໄມ້ໃນຊ່ວງເວລາທີ່ເໝາະສົມ.*

**ມາດຖານ 7.4** ເຖິງວ່າຈະນັບຂໍ້ມູນເປັນຄວາມລັບກໍຕາມ, ແຕ່ຜູ້ຈັດສັນຄຸ້ມຄອງຕ້ອງໃຫ້ມີບົດສະຫຼຸບກ່ຽວກັບ ອົງປະກອບພື້ນຖານຂອງແຜນຈັດສັນຄຸ້ມຄອງໃຫ້ສາທາລະນະ, ລວມທັງອັນທີ່ລວມຢູ່ໃນມາດຖານ 7.1 ນຳ.

*ຕົວຊີ້ບອກ:*

*7.4.1 ສັງລວມອົງປະກອບເບື້ອງຕົ້ນຂອງແຜນການຄຸ້ມຄອງປົກກະຕິ, ລວມທັງບັນດາສິ່ງທີ່ໄດ້ເຮັດເປັນລາຍການໄວ້ໃນມາດຖານ 7.1 ໃຫ້ມີພ້ອມໃຫ້ກັບສັງຄົມ. ກິດຈະການຂະໜາດໃຫຍ່ (> 10.000 ha) ມີການແຈ້ງໃຫ້ກັບສັງຄົມຮູ້ຢ່າງຕັ້ງໜ້າໃນລະຫວ່າງກອງປະຊຸມຜູ້ກ່ຽວຂ້ອງປົກກະຕິ (ເບິ່ງຂໍ້ 4.4.4) (**SLIMF**: ຕາມການສະເໜີ, FME ຈະໃຫ້ມີສ່ວນທີ່ກ່ຽວຂ້ອງຂອງແຜນການຄຸ້ມຄອງໃຫ້ກັບພາກສ່ວນຕ່າງໆ ຜູ້ທີ່ໄດ້ຮັບຜົນກະທົບໂດຍກົງຈາກກິດຈະກຳການຄຸ້ມຄອງປ່າໄມ້.*

© 2005 GFA Consulting Group. All rights reserved.

**ຫຼັກການ #8: ການຕິດຕາມກວດກາ ແລະ ການປະເມີນຜົນ.**

**ຕ້ອງດຳເນີນການຕິດຕາມກວດກາໃຫ້ເໝາະສົມກັບຂະໜາດ ແລະ ຄວາມ ລະອຽດຂອງການຈັດສັນຄຸ້ມຄອງ ເພື່ອປະເມີນເງື່ອນໄຂ ຂອງປ່າ, ຜົນຜະລິດຂອງປ່າ, ແຫຼ່ງທີ່ມາຂອງໄມ້, ກິດຈະກຳ ການຈັດສັນຄຸ້ມຄອງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ.**

**ມາດຖານ 8.1** ຄວາມຖີ່ ແລະ ຄວາມລະອຽດຂອງການຕິດຕາມກວດກາຕ້ອງພິຈາລະນາ ຕາມຂະໜາດ ແລະ ຄວາມລະອຽດຂອງການຈັດສັນຄຸ້ມຄອງຕະຫຼອດທັງ ຄວາມບອບບາງ ແລະ ຄວາມສັບຊ້ອນສຳພັນ ຂອງສະພາບແວດລ້ອມທີ່ຖືກກະທົບ. ແນວທາງການຕິດຕາມກວດກາ ຄວນຈະສອດຄ່ອງ ແລະ ສາມາດເຮັດຄືນໄດ້ ຕະຫຼອດເພື່ອຊ່ວຍໃຫ້ສາມາດປຽບທຽບໄດ້ ລະຫວ່າງຜົນ ແລະ ການປະເມີນການປ່ຽນແປງ.

*<u>ຕົວຊີ້ບອກ:</u>*

*8.1.1 ທຸກກິດຈະກຳທີ່ຮຽກຮ້ອງໃຫ້ມີການຕິດຕາມຕ້ອງໄດ້ຮັບການລະບຸ .*

*8.1.2 ແຜນການ ແລະການອອກແບບອີງຕາມຂະບວນການດຳເນີນການມີຢູ່ຕໍ່ເນື່ອງ ແລະສາມາດເຮັດຊ້ຳຄືນໄດ້ ແລະໄດ້ຮັບການຈັດຕັ້ງປະຕິບັດເພື່ອການຕິດຕາມ ແລະການລາຍງານເປັນໄລຍະ.*

*8.1.3 ຄວາມຖີ່ ແລະລາຍຈ່າຍຂອງການຕິດຕາມເໝາະສົມຕໍ່ກັບຂະໜາດ ແລະຄວາມຕັ້ງໃຈຂອງການດຳເນີນການຄຸ້ມຄອງປ່າໄມ້ ເຊັ່ນດຽວກັບຄວາມຊັບຊ້ອນສຳພັດຂອງສິ່ງແວດລ້ອມທີ່ຖືກກະທົບ.*

**ມາດຖານ 8.2** ການຈັດສັນຄຸ້ມຄອງປ່າຄວນປະກອບດ້ວຍການຄົ້ນຄວ້າ ແລະ ການເກັບກຳຂໍ້ມູນພື້ນຖານທີ່ຈຳເປັນໃນການຕິດຕາມກວດກາຕາມຕົວຊີ້ບອກລຸ່ມນີ້:

ກ) ຜົນຜະລິດຂອງຜະລິດຕະພັນປ່າໄທ້ງໝົດທີ່ໄດ້ຂຸດຄົ້ນ.

ຂ) ອັດຕາການຈະເລີນເຕີບໂຕ, ການສືບພັນ ແລະ ສະພາບປ່າ.

ຄ) ໂຄງປະກອບຂອງປ່າ ແລະ ການປ່ຽນແປງທີ່ສັງເກດໄດ້ໃນພືດ ແລະ ສັດ.

ງ) ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ທາງສັງຄົມ ໃນການຂຸດຄົ້ນ ແລະ ການຈັດຕັ້ງປະຕິບັດວຽກງານປ່າໄມ້ອື່ນໆ.

ຈ) ມູນຄ່າ, ຜະລິດຕະພັນ ແລະ ປະສິດຕະພາບຂອງການຈັດສັນຄຸ້ມຄອງປ່າໄມ້.

*<u>ຕົວຊີ້ບອກ:</u>*

*8.2.1 ຜົນຜະລິດຂອງຜະລິດຕະພັນຈາກປ່າໄມ້ທຸກອັນທີ່ຂຸດຄົ້ນໄປໄດ້ຮັບການບັນທຶກ.*

*8.2.2 ບ່ອນທີ່ຕົວແບບການເຕີບໂຕມາດຕະຖານ ຫຼືຂໍ້ມູນກ່ຽວກັບການເກີດໃໝ່ຂອງຊະນິດທາງການຄ້າບໍ່ເປັນທີ່ຮູ້ຈັກນັ້ນ, ມີໂຄງການເພື່ອເກັບກຳຂໍ້ມູນລະອຽດເພື່ອການຄຸ້ມຄອງໃນອະນາຄົດ.*

*8.2.3 ສະພາບຂອງປ່າ (ການເກີດມີສັດຕູພືດ, ພະຍາດ, ການປະກົດມີການອັດແໜ້ນຂອງດິນ, ການເຊາະເຈື່ອນ, ອື່ນໆ) ໄດ້ຮັບການທົບທວນ ແລະຕິດຕາມເບິ່ງປົກກະຕິ.*

*8.2.4 ພື້ນທີ່ອະນຸລັກ (ເບິ່ງ 6.2) ໄດ້ຮັບການຕິດຕາມປົກກະຕິ ເພື່ອຮັບປະກັນວ່າບໍ່ມີຫຼັກຖານຂອງການເຊື່ອມໂຊມຫຼືການລົບກວນ.*

*8.2.5 ອົງປະກອບ ແລະການປ່ຽນແປງໃນພັນໄມ້ ແລະຝູງສັດ ແລະປະສິດທິຜົນຂອງກິດຈະກຳອະນຸລັກ, ໂດຍສະເພາະແມ່ນຊະນິດທີ່ຫາຍາກ, ຖືກຄຸກຄາມ ແລະໃກ້ຈະສູນພັນໄດ້ຮັບການຕິດຕາມ.*

*8.2.6 ຕົວຊີ້ບອກຜົນກະທົບທາງດ້ານສິ່ງແວດລ້ອມ ແລະສັງຄົມຂອງການດຳເນີນການປ່າໄມ້, ລວມທັງດ້ານສຸຂະພາບ ແລະຄວາມປອດໄພ ໄດ້ຮັບການກຳນົດ ແລະຕິດຕາມຂໍ້ມູນທີ່ໄດ້ເກັບກຳ.*

*8.2.7 ການປະຕິບັດຂອງຜູ້ຮັບເໝົາໄດ້ຮັບການຕິດຕາມ, ລວມທັງການປະຕິບັດຕາມຂໍ້ກຳນົດຂອງສັນຍາ.*

© 2005 GFA Consulting Group.  All rights reserved.

**8.2.8** *ຄ່າໃຊ້ຈ່າຍກິດຈະກຳການຄຸ້ມຄອງປ່າໄມ້ທັງໝົດໄດ້ຮັບການບັນທຶກ ແລະປະເມີນຜົນ ເພື່ອຕັດສິນປະສິດທິພາບການຜະລິດ ແລະປະສິດທິພາບຂອງການຄຸ້ມຄອງປ່າໄມ້.*

**ມາດຖານ 8.3** ຜູ້ສັນຄຸ້ມຄອງປ່າໄມ້ຕ້ອງສະໜອງ ລະບົບເອກະສານອ້າງອີງ ເພື່ອຊ່ວຍ ອົງການຈັດຕັ້ງທີ່ຕິດຕາມກວດກາ ແລະ ຢັ້ງຢືນສາມາດຕິດຕາມແຕ່ລະຜົນຜະລິດປ່າ ຈາກແຫຼ່ງເດີມທີ່ມັນມາ, ຂະບວນການດັ່ງກ່າວເອີ້ນວ່າ "ການຢັ້ງຢືນແຫຼ່ງທີ່ມາ."

*<u>ຕົວຊີ້ບອກ:</u>*

**8.3.1** *ຜະລິດຕະພັນປ່າໄມ້ທີ່ຖືກຂາຍອອກໄປຕາມການຮັບຮອງແມ່ນພ້ອມທີ່ຈະສາມາດລະບຸໄດ້ເປັນການອອກມາຈາກປ່າໄມ້ທີ່ໄດ້ຮັບການປະເມີນ. ອັນນີ້ອາດຈະສາມາດບັນລຸໄດ້ຜ່ານການເຮັດເຄື່ອງໝາຍໃສ່ໄມ້, ລະບົບການຄວບຄຸມເອກະສານ, ການບັນທຶກການຜະລິດປະຈຳວັນ ຫຼືອາທິດ ຫຼືການປະສົມປະສານເຕັກນິກເຫຼົ່ານີ້ ຫຼືທີ່ຄ້າຍຄືກັບນີ້.*

**8.3.2** *ທຸກຜະລິດຕະພັນທີ່ຖືກຂາຍອອກໄປ ໂດຍການດຳເນີນການປ່າໄມ້ຕາມທີ່ໄດ້ຮັບການຢັ້ງຢືນໄດ້ຮັບການບັນທຶກດ້ວຍ: ປະເພດຜະລິດຕະພັນ ("FSC Pure" ນອກຈາກວ່າໄດ້ມີການນຳໃຊ້ຄຳສັບອື່ນຢູ່ໃນມາດຕະຖານ FSC COC), ປະລິມານ ແລະບໍລິມາດ, ວັນທີ, ເລກທີອະນຸຍາດ FSC (GFA-FM/COC- xxxxxx), ລູກຄ້າ, ແລະຂໍ້ມູນກ່ຽວກັບປະຕູປ່າໄມ້. ອັນນີ້ໄດ້ຮັບການສະໜັບສະໜູນໂດຍຫຼັກຖານຢູ່ໃນລະບົບການເກັບຮັກສາປຶ້ມ (ໃບເກັບເງິນ, ໃບບິນ, ໃບສັ່ງ, ອື່ນໆ).*

**8.3.3** *ການໃຊ້ເຄື່ອງໝາຍການຄ້າຂອງ FSC ອັນໃດອັນໜຶ່ງແມ່ນເປັນໄປຕາມມາດຕະຖານເຄື່ອງໝາຍການຄ້າ FSC (FSC-STD-50-001 ແລະນະໂຍບາຍ FSC ທີ່ກ່ຽວຂ້ອງ/ປ່ຽນແທນ) ແລະໄດ້ຮັບການອະນຸມັດໂດຍ GFA ຫຼືສະຖາບັນທີ່ໄດ້ຮັບອະນຸຍາດອື່ນໆກ່ອນການນຳໃຊ້.*

**ມາດຖານ 8.4** ນຳເອົາຜົນຂອງການຕິດຕາມກວດກາເຂົ້າໃນການຈັດຕັ້ງປະຕິບັດ ແລະ ໃນການທົບທວນຄືນແຜນຈັດສັນຄຸ້ມຄອງ.

*<u>ຕົວຊີ້ບອກ:</u>*

**8.4.1** *ມີລະບົບທີ່ສະແດງໃຫ້ເຫັນວິທີການນຳເອົາຜົນການຕິດຕາມປະເມີນຜົນເຂົ້າໃນການດັດແກ້ການຈັດຕັ້ງປະຕິບັດຂອງແຜນການຄຸ້ມຄອງ (**SLIMF**: ອ້າງອີງເຖິງຕົວຊີ້ບອກ ຕົວຊີ້ບອກ 7.2.3 ແລະ 7.2.4).*

**8.4.2** *ການປ່ຽນແປງຕໍ່ການຄຸ້ມຄອງທີ່ໄດ້ສະເໜີຢູ່ໃນເວລາການວິເຄາະຜົນການຕິດຕາມໄດ້ຮັບການຈັດຕັ້ງປະຕິບັດ (**SLIMF**: ອ້າງອີງເຖິງຕົວຊີ້ບອກ 7.2.3 ແລະ 7.2.4).*

**ມາດຖານ 8.5** ເຖິງວ່າຈະນັບຖືຄວາມລັບຂອງຂໍ້ມູນກໍຕາມ, ຜູ້ຈັດສັນຄຸ້ມຄອງປ່າຕ້ອງໄດ້ມີບົດສະຫຼຸບຜົນຂອງຕົວວັດໃນ ການຕິດຕາມກວດກາ ລວມທັງຕົວວັດໃນມາດຖານ 8.2.

*<u>ຕົວຊີ້ບອກ:</u>*

**8.5.1** *ການສັງລວມຜົນການຕິດຕາມ ແລະການວິເຄາະປົກກະຕິທີ່ເຮັດໂດຍທາງ FMU ແມ່ນມີພ້ອມໃຫ້ກັບສັງຄົມ. ກິດຈະການຂະໜາດໃຫຍ່ (> 10.000 ha) ໃຫ້ຂໍ້ມູນຢ່າງຕັ້ງໜ້າກັບສັງຄົມໃນລະຫວ່າງກອງປະຊຸມພາກສ່ວນກ່ຽວຂ້ອງປົກກະຕິ (ເບິ່ງຂໍ້ 4.4.4). (**SLIMF**: ຕາມການສະເໜີ, FME ຈະໃຫ້ມີແຜນການຄຸ້ມຄອງໃນສ່ວນທີ່ກ່ຽວຂ້ອງເອົາໃຫ້ກັບພາກສ່ວນຕ່າງໆ ຜູ້ທີ່ໄດ້ຮັບຜົນກະທົບໂດຍກົງໂດຍກິດຈະກຳການຄຸ້ມຄອງປ່າໄມ້).*

**ຫຼັກຖານ #9: ການບູລະນະຮັກສາທີ່ມີຄຸນຄ່າສູງທາງດ້ານອະນຸລັກ (HCVF)**

© 2005 GFA Consulting Group.  All rights reserved.

**ບັນດາກິດຈະກຳສຳຫຼັບການຄຸ້ມຄອງປ່າທີ່ມີຄຸ່ນຄ່າສູງທາງດ້ານການອະນຸລັກ ຕ້ອງຮັກສາ ແລະ ສົ່ງເສີມຄຸນສົມບັດຕ່າງໆ ທີ່ໄດ້ກຳນົດປ່າດັ່ງກ່າວ. ການພິຈາລະນາກ່ຽວກັບປ່າທີ່ມີຄຸນຄ່າສູງທາງດ້ານອະນຸລັກຕ້ອງໄດ້ພິຈາລະນາໃນແນວທາງປ້ອງກັນລ່ວງໜ້າ.**

**ມາດຖານ** 9.1 ການປະເມີນຜົນ້ພທ່ອກຳນົດການ ພິຈາລະນາ ການປາກົດຂອງ ຄຸນສົມບັດຕ່າງໆທີ່ມີໃນປ່າທີ່ມີຄຸນຄ່າ ທາງດ້ານການອະນຸລັກຕ້ອງໃຫ້ສຳເລັດ, ເໝາະສົມກັບຂະໜາດ ແລະ ຄວາມລະອຽດໃນການຈັດສັນຄຸ້ມຄອງ.

*<u>ຕົວຊີ້ບອກ:</u>*

***9.1.1*** *FMU ໄດ້ຮັບການປະເມີນຢ່າງພຽງພໍ (ໃນການປຶກສາຫາລືກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ຕົວຢ່າງ: ອົງການອະນຸລັກ, ອົງການຄວບຄຸມ ແລະພາກສ່ວນອື່ນໆໃນຂັ້ນສູນກາງ ແລະທ້ອງຖິ່ນ) ແລະທາງ HCVF ໃດໜຶ່ງ ແລະລັກສະນະທາງດ້ານຊີວະວິທະຍາ ແລະ/ຫຼືເສດຖະກິດ-ສັງຄົມ ຫຼືທາງວັດທະນະທຳໄດ້ຮັບການກຳນົດ.*

***9.1.2*** *ຂັ້ນຕອນການປະເມີນໄດ້ຮັບການບັນທຶກເປັນເອກະສານ ແລະໄດ້ມີການຮັກສາບັນທຶກເລື່ອງການປຶກສາຫາລື ແລະແຫຼ່ງຂໍ້ມູນໄວ້.*

***9.1.3*** *ຖ້າມີ HCV ຢູ່, ການຄຸ້ມຄອງແມ່ນຄຸ້ນເຄີຍກັບລັກສະນະຂອງການມີຢູ່ ແລະແຜນທີ່ມີຢູ່ນັ້ນບົ່ງບອກເຖິງພື້ນທີ່ປ່າ HCV ແລະປ່າສະຫງວນອື່ນໆ.*

**ມາດຖານ** 9.2 ສ່ວນໜຶ່ງຂອງຂັ້ນຕອນການຢັ້ງຢືນ ທີ່ໄດ້ປຶກສາຫາລື ຕ້ອງເນັ້ນໃສ່ ຄຸນສົມບັດຂອງການອະນຸລັກ ແລະ ທາງເລືອກສຳລັບການບູລະນະຮັກສາໃນເຂດນັ້ນ..

*<u>ຕົວຊີ້ບອກ / ຄຳຖາມທີ່ສຳຄັນ:</u>*

***9.2.1*** *ເຈົ້າຂອງ/ຜູ້ຈັດການໄດ້ກຳນົດກົດເກນການຄຸ້ມຄອງທີ່ເໝາະສົມສຳລັບ HCVF ໃນການປຶກສາຫາລືຮ່ວມກັບອົງການຈັດຕັ້ງທີ່ກ່ຽວຂ້ອງ, ຕົວຢ່າງ ອົງການອະນຸລັກ, ອົງການຄຸ້ມຄອງ ແລະພາກສ່ວນອື່ນໆໃນລະດັບຊາດ ແລະລະດັບທ້ອງຖິ່ນ.*

***9.2.2*** *ເມື່ອ HCVF ໄດ້ຮັບການກຳນົດຕໍ່ກັບລັກສະນະທາງດ້ານເສດຖະກິດ-ສັງຄົມ ຫຼືວັດທະນະທຳຂອງມັນເອງແລ້ວ, ຄວນຈະມີການວິເຄາະ ແລະການຕັດສິນໃຈຮ່ວມກັນກັບພາກສ່ວນຕ່າງໆທີ່ໄດ້ຮັບຜົນກະທົບໂດຍກົງ; ຄວນໄດ້ມີການດຳເນີນຄວາມພະຍາຍາມເພື່ອສ້າງຕັ້ງຂໍ້ຕົກລົງການຄຸ້ມຄອງຮ່ວມກັນກັບພາກສ່ວນອື່ນໆ.*

**ມາດຖານ** 9.3 ແຜນຈັດສັນຄອງຄວນລວມເອົາ ແລະ ຈັດຕັ້ງປະຕິບັດ ມາດຕະການສະເພາະເພື່ອຮັບປະກັນການປົກປັກຮັກສາ ແລະ/ຫຼື ເສີມຂະຫຍາຍຄຸນສົມບັດຂອງການອະນຸລັກທີ່ນຳໃຊ້ ໃຫ້ສອດຄ່ອງກັບແນວທາງປ້ອງກັນລ່ວງໜ້າ. ມາດຕະການດັ່ງກ່າວເຫຼົ່ານີ້ຄວນຈະສັງລວມຂອງແຜນຈັດສັນຄຸ້ມຄອງປ່າໄມ້ຢ່າງເປີດເຜີຍ.

*<u>ຕົວຊີ້ບອກ:</u>*

***9.3.1*** *ແຜນການຄຸ້ມຄອງລະບຸລັກສະນະຂອງ HCV ທີ່ໄດ້ກຳນົດ ແລະແຜນທີ່ສະແດງໃຫ້ເຫັນເຂດທີ່ມີວິກິດ.*

***9.3.2*** *ແຜນການຄຸ້ມຄອງລະບຸມາດຕະການທີ່ຮັບປະກັນການດູແລຮັກສາ ແລະ/ຫຼືການປັບປຸງລັກສະນະຂອງ HCV ທີ່ນຳໃຊ້ໄດ້.*

***9.3.3*** *ບົດສັງລວມແຜນການຄຸ້ມຄອງທີ່ເປີດເຜີຍສູ່ສັງຄົມໄດ້ແມ່ນມີຢູ່ຕາມຂໍ້ທີ 7.5. ແລະປະກອບມີມາດຕະການຕ່າງໆທີ່ໄດ້ກຳນົດອອກ ເພື່ອປັບປຸງລັກສະນະຂອງ HCV ທີ່ໄດ້ກຳນົດ.*

© 2005 GFA Consulting Group.  All rights reserved.

**ມາດຖານ 9.4** ຕ້ອງດຳເນີນການຕິດຕາມກວດກາປະຈຳປີ ເພື່ອປະເມີນປະສິດທິຜົນ ຂອງມາດຕະການ ທີ່ນຳໃຊ້ ເພື່ອຮັກສາ ຫຼື ເສີມຂະຫຍາຍ ຄຸນສົມບັດຂອງການອະນຸລັກທີ່ນຳໃຊ້.

*<u>ຕົວຊີ້ບອກ:</u>*

***9.4.1*** *ຕົວຊີ້ບອກ ແລະຄວາມຖີ່ຂອງການຕິດຕາມໄດ້ຮັບການກຳນົດໃນການປຶກສາຫາລືກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ຕົວຢ່າງ ອົງການອະນຸລັກ, ອົງການຄຸ້ມຄອງ ແລະພາກສ່ວນຕ່າງໆໃນລະດັບຊາດ ແລະລະດັບທ້ອງຖິ່ນ ເພື່ອຕິດຕາມປະສິດທິພາບຂອງມາດຕະການແຕ່ລະອັນທີ່ໄດ້ບັນຍາຍໄວ້ໃນແຜນການຄຸ້ມຄອງ (**SLIMF**: ອ້າງອີງເຖິງຕົວຊີ້ບອກ 8.2.4 –8.2.6) .*

***9.4.2*** *ບັນທຶກການຕິດຕາມໄດ້ຖືກເກັບຮັກສາໄວ້ ແລະໄດ້ຖືກນຳໃຊ້ເພື່ອປັບປຸງການຄຸ້ມຄອງໃນອະນາຄົດ.*

© 2005 GFA Consulting Group.  All rights reserved.



**ຫຼັກຖານ # 10: ການປູກປ່າ**

**ການປູກປ່າແມ່ນຕ້ອງໄດ້ວາງແຜນ ແລະ ຈັດສັນຄຸ້ມຄອງ ໃຫ້ສອດຄ່ອງກັບຫຼັກການ ແລະ ມາດຖານ 1-9, ແລະ ຫຼັກການ 10 ແລະ ມາດຖານຂອງມັນ. ເມື່ອປ່າປູກສາມາດສະໜອງປະໂຫຍດທາງເສດຖະກິດ ແລະ ສັງຄົມ, ແລະ ສາມາດປະກອບສ່ວນ ເພື່ອຕອບສະໜອງຄວາມຕ້ອງການຂອງໂລກ ຕໍ່ກັບ ຜະລິດຕະພັນປ່າໄມ້, ຕ້ອງເຮັດໃຫ້ການ ຈັດສັນຄຸ້ມຄອງຄົບຖ້ວນ, ລຸດຜ່ອນການກົດດັນຕໍ່, ແລະ ສົ່ງເສີມການຟື້ນຟູ ແລະ ການອະນຸລັກປ່າທຳມະຊາດ.**

**ການປູກປ່າ 10.1** ຕ້ອງລະບຸຢ່າງຈະແຈ້ງໃນແຜນຈັດສັນຄຸ້ມຄອງ ກ່ຽວກັບຈຸດປະສົງຂອງການຈັດສັນຄຸ້ມຄອງປ່າປູກ, ລວມທັງຈຸດປະສົງການອະນຸລັກປ່າທຳມະຊາດ ແລະ ການຟື້ນຟູປ່າ, ແລະ ສະແດງໃຫ້ເຫັນຢ່າງຈະແຈ້ງໃນການຈັດຕັ້ງປະຕິບັດແຜນການດັ່ງກ່າວ.

*<u>ຕົວຊີ້ບອກ:</u>*

***10.1.1*** *ຈຸດປະສົງຂອງການຄຸ້ມຄອງການປູກໄມ້ໄດ້ເອົາລວມເຂົ້າຢູ່ໃນແຜນການຄຸ້ມຄອງ, ການຮັບຮອງການອະນຸລັກ ແລະການຟື້ນຟູປ່າທຳມະຊາດ.*

***10.1.2*** *ແຜນການຄຸ້ມຄອງປ່າໄມ້ລວມມີທັງຍຸດທະສາດ ຫຼືອົງປະກອບເພື່ອອະນຸລັກປ່າທຳມະຊາດ ແລະເພື່ອຟື້ນຟູບ່ອນທີ່ເສື່ອມໂຊມ.*

***10.1.3*** *ໄດ້ເອົາຫຼັກຖານອັນຊັດເຈນກ່ຽວກັບການຈັດຕັ້ງປະຕິບັດການຄຸ້ມຄອງໃຫ້. -> ເບິ່ງເພີ່ມຢູ່ C 7.1 - 7.5*

**ມາດຖານ 10.2** ການວາງແຜນ ແລະ ການອອກແບບສວນປູກຕ້ອງເປັນການເສີມຂະຫຍາຍການປ້ອງກັນ, ການຟື້ນຟູ ແລະ ກສນອະນຸລັກຊັບພະຍາກອນປ່າທຳມະຊາດ, ແລະ ບໍ່ເພີ່ມຄວາມກົດດັນໃຫ້ແກ່ປ່າທຳມະຊາດ. ຕ້ອງເບິ່ງເຂດເຊື່ອມຕໍ່ຂອງສັດປ່າ, ເຂດແຫຼ່ງນ້ຳ ແລະ ປ່າເປັນຍ່ອມທີ່ມີອາຍຸແຕກຕ່າງກັນ ແລະ ຮອບວຽກຕັດຟັນ ເຂົ້າໃນການວາງແຜນປູກປ່າ ໃຫ້ສອດຄ່ອງ ກັບຂະໜາດຂອງການປະຕິບັດງານ. ຂະໜາດ ແລະ ຜັງຂອງດອນປູກປ່າຕ້ອງໃຫ້ກົມກຽວກັບຕົວແບບຂອງປ່າໄມ້ທີ່ພົບເຫັນຕາມທິວທັດທຳມະຊາດຢູ່ເຂດນັ້ນ.

*<u>ຕົວຊີ້ບອກ:</u>*

***10.2.1*** *ການຄຸ້ມຄອງການປູກໄມ້ໄດ້ຮັບການອອກແບບເພື່ອຮັກສາ ຫຼືປັບປຸງຄຸນລັກສະນະຂອງປ່າທຳມະຊາດໃກ້ຄຽງ.*

***10.2.2*** *ນະໂຍບາຍ ແລະຂັ້ນຕອນດຳເນີນການໄດ້ຮັບການຈັດຕັ້ງປະຕິບັດ ເຊິ່ງຮັບປະກັນວ່າ:*

- *a) ຕອນປ່າໄມ້ຢືນຕົ້ນທີ່ມີອາຍຸຕ່າງໆ ແລະການໝູນວຽນໄດ້ຮັບການສ້າງຂຶ້ນ ແລະດູແລຮັກສາ;*
- *b) ມີເຂດກັນຊົນໃຫ້ກັບສັດປ່າ;*
- *c) ໃຫ້ມີບ່ອນເຂດກັນຊົນຂອງພືດພັນທຳມະຊາດຢູ່ໃກ້ແຄມນ້ຳ ຫຼືຫ້ວຍນ້ຳ*
- *d) ສິ່ງເຫຼົ່ານີ້ໄດ້ຮັບການປົກປ້ອງຈາກການດຳເນີນການປູກຕົ້ນໄມ້ ແລະການຂຸດຄົ້ນ, ແລະໄດ້ພັດທະນາ*
- *e) ໄປເປັນເຂດສະຫງວນຕາມແຄມນ້ຳ.*

***10.2.3*** *ທັງການອອກແບບການກຳນົດບ່ອນທົ່ວໄປ ແລະຢູ່ພາຍໃນຂອງການປູກໄມ້ນັ້ນປະສົມກົມກຽວກັບສະພາບພູມສັນຖານຂອງພື້ນທີ່.*

***10.2.4*** *ແຜນການປູກປ່າຂອງ FMU ມີຄວາມສອດຄ່ອງກັບແຜນພັດທະນາທ້ອງຖິ່ນ (ຂັ້ນແຂວງ, ຂັ້ນເມືອງ ແລະຊຸມຊົນ).*

© 2005 GFA Consulting Group.  All rights reserved.

**ມາດຖານ 10.3** ຄວາມຫຼາກຫຼາຍໃນອົງປະກອບຂອງປ່າປູກ ແມ່ນຕ້ອງການທີ່ສຸດ ເພື່ອເສີມຂະຫຍາຍຄວາມໝັ້ນຄົງທາງເສດຖະກິດ, ສັງຄົມ ແລະ ນິເວດວິທະຍາ. ຄວາມຫຼາກຫຼາຍດັ່ງກ່າວອາດລວມເອົາຂະໜາດ ແລະ ການກະຈາຍເປັນໄລຍະຂອງເຂດຈັດສັນຄຸ້ມຄອງ ພາຍໃນ ທັດສະນີຍະພາບຕ່າງໆ, ອົງປະກອບຂອງຊະນິດພັນທາງຈຳນວນ ແລະ ທາງພັນທຸກຳ, ໂຄງສ້າງ ແລະ ຂັ້ນອາຍຸ.

*<u>ຕົວຊີ້ບອກ:</u>*

***10.3.1*** *ການຄຸ້ມຄອງການປູກໄມ້ຮັກສາ ແລະ/ຫຼືປັບປຸງຄວາມຫຼາກຫຼາຍທາງດ້ານສະພາບພື້ນທີ່ໂດຍການປ່ຽນແປງຂະໜາດແປງ ແລະການກະຈາຍຂອງພວກມັນຢູ່ໃນພື້ນທີ່ນັ້ນ.*

***10.3.2*** *ການຄຸ້ມຄອງເຮັດໃຫ້ມີການນຳໃຊ້ຊະນິດແນວພັນຂອງຕົ້ນໄມ້ ແລະຕົ້ນກຳເນີດ ຫຼືຕົ້ນໄມ້ອື່ນໆ.*

***10.3.3*** *ບໍ່ນຳໃຊ້ໄດ້ກັບການດຳເນີນການຂອງ SLIMF: ຢ່າງໜ້ອຍສຸດ 20% ຂອງການປູກໄມ້ປະກອບໄປດ້ວຍພືດປະສົມ, ນອກຈາກວ່າມັນກົງກັບຮູບແບບການແຈກຢາຍຕາມທຳມະຊາດສຳລັບຊະນິດພັນທີ່ຢູ່ໃນພາກພື້ນທີ່ໜ້າເປັນຫ່ວງ.*

***10.3.4*** *ມີເອກະສານການຈັດປະເພດດິນປ່າໄມ້ ແລະໄດ້ເຮັດເປັນແຜນທີ່ໄວ້ພາຍໃຕ້ຂະໜາດທີ່ເໝາະສົມ.*

***10.3.5*** *ມີການອອກແບບການປູກປ່າຢູ່ ແລະມັນໄດ້ຮັບການອະນຸມັດໂດຍອົງການທີ່ມີອຳນາດ ຖ້າຫາກກົດໝາຍຕ້ອງການໃຫ້ມີເຊັ່ນນັ້ນ.*

**ມາດຖານ 10.4** ການຄັດເລືອກຊະນິດພັນທີ່ຈະປູກຕ້ອງຂຶ້ນກັບຄວາມເໝາະສົມຂອງສະຖານທີ່ ແລະ ຄວາມເໝາະສົມຕໍ່ຈຸດປະສົງຂອງການຈັດສັນຄຸ້ມຄອງ. ເພື່ອເສີມຂະຫຍາຍ ການອະນຸລັກ ຊີວະນາໆພັນ, ການປູກຊະນິດພັນພື້ນເມືອງ ແລະ ການຟື້ນຟູລະບົບນິເວດວິທະຍາທີ່ເຊື່ອມໂຊມ ແມ່ນເໝາະສົມ ກວ່າຊະນິດພັນຕ່າງຖິ່ນ. ຊະນິດພັນຕ່າງຖິ່ນ, ເຊິ່ງຈະນຳໃຊ້ເມື່ອ ຄຸນສົມບັດຂອງມັນກໍ ກວ່າຊະນິດພັນພື້ນເມືອງ, ຕ້ອງຕິດຕາມກວດກາຢ່າງລະມັດລະວັງ ເພື່ອກວດກາເບິ່ງການຕາຍທີ່ຜິດປົກກະຕິ, ພະຍາດ ຫຼື ການລະບາດຂອງແມງໄມ້ ແລະ ຜົນກະທົບທາງສະພາບແວດລ້ອມໃນທາງລົບ.

*<u>ຕົວຊີ້ບອກ:</u>*

***10.4.1*** *ມີການໃຫ້ເຫດຜົນອັນຊັດເຈນຕໍ່ກັບທາງເລືອກຂອງຊະນິດ ແລະປະເພດທີ່ໄດ້ເລືອກເພື່ອການປູກ, ເຊິ່ງໄດ້ເອົາໃຈໃສ່ຕາມຈຸດປະສົງຂອງການປູກໄມ້, ແລະສະພາບດິນຟ້າອາກາດ, ທໍລະນີວະທິຍາ ແລະດິນຢູ່ໃນບ່ອນປູກໄມ້.*

***10.4.2*** *ຖ້າເລືອກຊະນິດຈາກຕ່າງຖິ່ນ, ແມ່ນໄດ້ມີການພິສູດການປະຕິບັດໃນລະດັບໃຫຍ່ກວ່າ.*

***10.4.3*** *ບໍ່ມີການການປູກຊະນິດພັນທີ່ຈະເປັນການບຸກລຸກພືດອື່ນ.*

***10.4.4*** *ມີຂະບວນການປະກອບເອກະສານເພື່ອຕິດຕາມການເຕີບໂຕຂອງຊະນິດມາຈາກຕ່າງຖິ່ນ ແລະຂະບວນການນັ້ນໄດ້ຮັບການຈັດຕັ້ງປະຕິບັດ.*

***10.4.5*** *ຄວນມີການເນັ້ນໜັກໃສ່ການປູກ ແລະ/ຫຼືການຄົ້ນຄວ້າແບບປະຍຸກຊະນິດພັນປ່າໄມ້ທີ່ເປັນຂອງປະຈຳຖິ່ນນັ້ນ.*

**ມາດຖານ 10.5** ຕ້ອງແບ່ງສັດສ່ວນເຂດຈັດສັນຄຸ້ມຄອງປ່າໃຫ້ສົມກັບຂະໜາດຂອງປ່າປູກ ແລະ ພິຈາລະນາຕາມມາດຖານຂອງພາກພື້ນ ເພື່ອຟື້ນຟູພື້ນທີ່ໃຫ້ຄຸມດ້ວຍປ່າທຳມະຊາດ.

*<u>ຕົວຊີ້ບອກ:</u>*

© 2005 GFA Consulting Group.  All rights reserved.

**10.5.1** *ສັດສ່ວນທີ່ເໝາະສົມຂອງພື້ນທີ່ການຄຸ້ມຄອງປ່າໄມ້ໂດຍລວມ (ໂດຍທົ່ວໄປແມ່ນ 5 – 10 %) ໄດ້ຮັບການຄຸ້ມຄອງ ເພື່ອຟື້ນຟູບ່ອນນັ້ນໃຫ້ເປັນປ່າທຳມະຊາດ (**SLIMF**: ໄດ້ເຮັດການເພີ່ມຄຸນຄ່າທາງດ້ານນິເວດວິທະຍາການປູກປ່າໃນບ່ອນທີ່ມີລັກສະນະການອະນຸລັກຢູ່).*

**10.5.2** *ມີຍຸດທະສາດທີ່ໄດ້ເຮັດເປັນເອກະສານໄວ້ (ຕາມທີ່ເປັນສ່ວນໜຶ່ງຂອງການຄຸ້ມຄອງ) ສຳລັບພື້ນທີ່ຈະເຮັດການຟື້ນຟູເປັນປ່າທຳມະຊາດ ແລະມັນໄດ້ຮັບການຈັດຕັ້ງປະຕິບັດ.*

**10.5.3** *ພື້ນທີ່ຈະຖືກຟື້ນຟູເປັນປ່າທຳມະຊາດໄດ້ຮັບການປັກຫຼັກໝາຍຢູ່ໃນແຜນທີ່ ແລະໄດ້ຮັບການພິຈາລະນາຢູ່ໃນເອກະສານການວາງແຜນການ.*

**ມາດຖານ 10.6** ຕ້ອງດຳເນີ້ນມາດຕະການເພື່ອຮັກສາ ຫຼື ປັບປຸງໂຄງສ້າງຂອງດິນ, ຄວາມອຸດົມສົມບູນ ແລະ ຊີວະພາບ. ເຕັກນິກ ແລະ ອັດຕາການຂຸດຄົ້ນ, ການບູລະນະ ແລະ ການສ້າງທາງ, ແລະ ການເລືອກຊະນິດພັນ ບໍ່ຄວນສົ່ງຜົນໃຫ້ດິນເຊື່ອມໂຊມໃນໄລຍະຍາວ ຫຼື ມີຜົນກະທົບທາງລົບຕໍ່ຄຸນນະພາບ ແລະ ປະລິມານນ້ຳ ຫຼື ເຮັດໃຫ້ນ້ຳຫັນເາຈາກສາຍນ້ຳທີ່ເຄີຍໄຫຼ.

*<u>ຕົວຊີ້ບອກ:</u>*

**10.6.1** *ວິທີການເພື່ອປົກປ້ອງດິນ ແລະຊັບພະຍາກອນນ້ຳໄດ້ອອກມີລາຍລະອຽດຊັດເຈນຢູ່ໃນແຜນການຄຸ້ມຄອງ ຫຼື ເອກະສານສະໜັບສະໜູນ.*

**10.6.2** *ໄດ້ອອກແບບແຜນການ ແລະຂັ້ນຕອນດຳເນີນການຟື້ນຟູປ່າຫຼັງຈາກຂຸດຄົ້ນ ເພື່ອເຮັດໃຫ້ເກີດດິນປອກໂລ້ນໜ້ອຍທີ່ສຸດ, ແລະເພື່ອຮັບປະກັນໃຫ້ຕົ້ນໄມ້ເກີດຂຶ້ນຢ່າງໄວທີ່ສຸດເທົ່າທີ່ຈະເປັນໄປໄດ້.*

**10.6.3** *ບໍ່ມີຫຼັກຖານຂອງການເສື່ອມໂຊມຂອງບ່ອນນັ້ນຢູ່ໃນສະໜາມ.*

**10.6.4** *ການປະຕິບັດການຄຸ້ມຄອງບໍ່ເຮັດໃຫ້ເກີດການຫຼຸດລົງຂອງປະລິມານນ້ຳ ແລະ/ຫຼືປ່ຽນຮູບແບບການລະບາຍນ້ຳ.*

**ມາດຖານ 10.7** ຕ້ອງດຳເນີນມາດຕະການຕ່າງໆ ເພື່ອປ້ອງກັນ ແລະ ຫຼຸດຜ່ອນ ການລະບາດຂອງສັດຕູພືດ, ພະຍາດ, ໄຟ ແລະ ການນຳພືດຄຸກຄາມເຂົ້າມາ. ການຄຸ້ມຄອງສັດຕູພືດແບບປະສົມປະສານຕ້ອງມີໃນແຜນຄຸ້ມຄອງ, ໂດຍອາໄສ ການປ້ອງກັນ ແລະ ວິທີການຄວບຄຸມທາງຊີວະພາບ ຫຼາຍກວ່າຈະໃຊ້ປຸ໋ຍ ແລະ ຢາຂ້າສັດຕູພືດທາງເຄມີ, ລວມທັງການນຳໃຊ້ພວກມັນໃນສວນກ້າ. ການນຳໃຊ້ສານເຄມີໄດ້ສັງລວມໄວ້ແລ້ວໃນມາດຖານ 6.6 ແລະ 6.7

*<u>ຕົວຊີ້ບອກ:</u>*

**10.7.1** *ໄດ້ມີການລະບຸຫຼັກການທາງດ້ານສັດຕູພືດ ແລະພະຍາດຂອງປ່າໄມ້.*

**10.7.2** *ຂະບວນການທີ່ໄດ້ບັນທຶກເປັນເອກະສານໄວ້ໃນເລື່ອງການຈັດການສັດຕູພືດແບບປະສົມປະສານ, ລວມທັງຕົ້ນໄມ້ທີ່ຈະເປັນການບຸກລຸກພືດອື່ນ ພ້ອມດ້ວຍຄວາມເຊື່ອຖືເບື້ອງຕົ້ນກ່ຽວກັບວິທີການປ້ອງກັນ ແລະຄຸ້ມຄອງທາງດ້ານຊີວະວິທະຍາກຳລັງໄດ້ຮັບການຈັດຕັ້ງປະຕິບັດ.*

**10.7.3** *ໄດ້ມີການປະເມີນຜົນຄວາມຕ້ອງການຕໍ່ການຈັດການ ແລະການຄຸ້ມຄອງໄຟ, ຖ້າຫາກມີຄວາມຈຳເປັນແລ້ວຂັ້ນຕອນດຳເນີນການ ແລະອຸປະກອນອັນພຽງພໍຕໍ່ກັບການປ້ອງກັນ ແລະການດັບໄຟປ່າແມ່ນກຳລັງໄດ້ຮັບການຈັດຕັ້ງປະຕິບັດຢູ່.*

**10.7.4** *ນະໂຍບາຍເພື່ອຫຼຸດການນຳໃຊ້ສານເຄມີ ແລະປຸ໋ຍ ລວມທັງການນຳໃຊ້ຢູ່ໃນເຮືອນກ້າເບ້ຍ ໄດ້ຮັບການຈັດຕັ້ງປະຕິບັດ.*

© 2005 GFA Consulting Group.  All rights reserved.

**ມາດຖານ 10.8** ການຕິດຕາມວກດກາການປູກ ທີ່ເໝາະສົມກັບຂະໜາດ ແລະ ຄວາມຫຼາກຫຼາຍຂອງການປະຕິບັດງານ, ຕ້ອງລວມເອົາການປະເມີນຜົນຕໍ່ທ່າແຮງຂອງຜົນກະທົບທາງສັງຄົມ ແລະ ທາງນິເວດວິທະຍາໃນຂົງເຂດ ແລະ ນອກຂົງເຂດ, (ເຊັ່ນ: ການສືບພັນທຳມະຊາດ, ຜົນກະທົບຕໍ່ຊັບພະຍາກອນນ້ຳ ແລະ ຄວາມອຸດົມສົມບູນຂອງດິນ, ແລະ ຜົນກະທົບຕໍ່ຄວາມເປັນຢູ່ຂອງສັງຄົມ ແລະ ຄວາມໝັ້ນຄົງຂອງທ້ອງຖິ່ນ), ນອກຈາກນີ້ຍັງແມ່ນທ່າແຮງທີ່ສົ່ງຜົນຕໍ່ອົງປະກອບຕ່າງໆທີ່ເນັ້ນໜັກໃນຫຼັກການ 8,6 ແລະ 4. ບໍ່ຄວນປູກໄມ້ຊະນິດພັນໃດໜຶ່ງໃນເນື້ອທີ່ ຂະໜາດໃຫຍ່ຈົນກວ່າການທົດລອງທາງທ້ອງຖິ່ນ ແລະ/ຫຼື ປະສົບການໄດ້ສະແດງໃຫ້ເຫັນວ່າຊະນິດພັນເຫຼົ່ານັ້ນ ໄດ້ຮັບຕົວທາງນິເວດວິທະຍາໃນພື້ນທີ່ແລ້ວ, ບໍ່ໄດ້ຄຸກຄາມ (ແຜ່ກະຈາຍ), ແລະບໍ່ມີຜົນກະທົບທາງນິເວດວິທະຍາທາງລົບ. ຈົ່ງເອົາໃຈໃສ່ພິເສດຕໍ່ບັນຫາທາງສັງຄົມໃນການເຂົ້າໄປຄອບຄອງທີ່ດິນເພື່ອປູກປ່າ, ໂດຍສະເພາະການປົກປ້ອງສິດຂອງ ການເປັນເຈົ້າຂອງ, ນຳໃຊ້ ແລະ ການເຂົ້າຫາທ້ອງຖິ່ນ.

*ຕົວຊີ້ບອກ:*

***10.8.1*** *ບໍ່ມີການປູກໄມ້ຊະນິດຕ່າງໆໃນຂະໜາດໃຫຍ່ ທີ່ບໍ່ໄດ້ສະແດງອອກວ່າມີຄວາມເໝາະສົມຕໍ່ກັບພື້ນທີ່ບົນພື້ນຖານຜົນການທົດລອງ ແລະປະສົບການ.*

***10.8.2*** *ບໍ່ມີການສ້າງສວນປູກໄມ້ຢູ່ໃນບ່ອນທີ່ມີລະບົບນິເວດອັນສຳຄັນ ຫຼືອ່ອນໄຫວງ່າຍ; ພື້ນທີ່ບ່ອນທີ່ມີຄວາມຫຼາກຫຼາຍທາງດ້ານຊີວະນາໆພັນສູງ ຫຼືເປັນເອກະລັກສະເພາະ; ພື້ນທີ່ສະຫງວນທີ່ໄດ້ວາງແຜນໄວ້ ຫຼືບ່ອນທີ່ອາດຈະມີຜົນກະທົບທີ່ເປັນໄພຕໍ່ກັບພື້ນທີ່ຮັບນ້ຳອັນສຳຄັນ.*

***10.8.3*** *ການຕິດຕາມລວມມີທັງການປະເມີນກະທົບທາງດ້ານນິເວດວິທະຍາ ແລະສັງຄົມຂອງກິດຈະກຳການປູກໄມ້ຢູ່ໃນ ແລະຢູ່ນອກພື້ນທີ່ບ່ອນທີ່ອາດຈະເປັນໄດ້ (ເບິ່ງໃນມາດຖານ 8.2 ເພີ່ມເຕີມ). (**SLIMF**: FME ຈະເຮັດເອກະສານຜົນກະທົບທາງລົບຕໍ່ສັງຄົມ ແລະສິ່ງແວດລ້ອມ ແລະອອກແບບ ແລະຈັດຕັ້ງປະຕິບັດມາດຕະການເພື່ອກ່າວເຖິງຜົນກະທົບຕ່າງໆ).*

***10.8.4*** *ການຊື້ທີ່ດິນ ຫຼືການໃຊ້ເຊົ່າທີ່ດິນເພື່ອການສ້າງສວນປູກໄມ້ບໍ່ມີຜົນກະທົບທີ່ເປັນໄພຕໍ່ກັບຊຸມຊົນ ແລະ/ຫຼືການນຳໃຊ້ຊັບພະຍາກອນໂດຍຄົນທ້ອງຖິ່ນ ແລະຈະບໍ່ມີການປູກໄມ້ຢູ່ໃນທີ່ດິນບ່ອນທີ່ຍັງບໍ່ທັນມີການມອບຄວາມເປັນເຈົ້າຂອງ ແລະສິດການນຳໃຊ້.*

**ມາດຖານ 10.9** ການສ້າງສວນປູກໄມ້ເນື້ອທີ່ທີ່ໄດ້ຫັນປ່ຽນຈາກ ປ່າທຳມະຊາດຫຼັງຈາກ ເດືອນພະຈິກ 1994, ຕາມປົກກະຕິແລ້ວ ຈະບໍ່ມີເງື່ອນໄຂສຳຫຼັບການຢັ້ງຢືນ. ອາດອະນຸມັດການຢັ້ງຢືນໄດ້ ໃນກໍລະນີ ມີຫຼັກຖານພຽງພໍເພື່ອນຳສະເໜີຕໍ່ອົງກອນຢັ້ງຢືນ ໂດຍທີ່ວ່າຜູ້ຈັດສັນຄຸ້ມຄອງ/ເຈົ້າຂອງບໍ່ໄດ້ຮັບຜິດຊອບໂດຍກົງຫຼືໂດຍອ້ອມຕໍ່ການຫັນປ່ຽນເນື້ອທີ່ດັ່ງກ່າວ.

*ຕົວຊີ້ບອກ:*

***10.9.1*** *ມີເອກະສານເປັນລາຍລັກອັກສອນທີ່ບໍ່ມີການປູກໄມ້ຢູ່ໃນທີ່ດິນຫັນປ່ຽນມາຈາກປ່າທຳມະຊາດ ຫຼັງຈາກວັນທີ 1 ພະຈິກ 1994 (ແຕ່ໃຫ້ເບິ່ງໃນຂໍ້ທີ 6.10 ແລະ 0.9), ນອກຈາກວ່າມີຫຼັກຖານອັນຊັດເຈນທີ່ເຈົ້າຂອງ ແລະຜູ້ຈັດການປະຈຸບັນບໍ່ໄດ້ຮັບຜິດຊອບໂດຍທາງກົງ ຫຼືທາງອ້ອມຕໍ່ການຫັນປ່ຽນນັ້ນ.*

## ເອກະສານຊ້ອນທ້າຍ 1: ປະມວນຄຳສັບ

## *ເອກະສານຊ້ອນທ້າຍ 2: ກົດໝາຍ ແລະກົດລະບຽບ*

© 2005 GFA Consulting Group. All rights reserved.

- *ກົດໝາຍປ່າໄມ້ (2008)*
- *ກົດໝາຍສັດປ່າ (2007)*
- *ກົດລະບຽບຂອງກະຊວງກະສິກຳ ແລະປ່າໄມ້ ເລກທີ 0360 (2003) ກ່ຽວກັບການຄຸ້ມຄອງພື້ນທີ່ອະນຸລັກຊີວະນາໆພັນແຫ່ງຊາດ (NBCAs) ແລະການອະນຸລັກສັດນໍ້າ ແລະສັດປ່າ*

***ເອກະສານຊ້ອນທ້າຍ 3: ສົນທິສັນຍາທີ່ ສປປ ລາວ ໃຫ້ສັດຕະຍາບັນ***

| ***ສົນທິສັນຍາ*** |
|---|
| *C5 ສົນທິສັນຍາ (ອຸດສາຫະກຳ) ຍຸກຕໍ່າສຸດ, 1919* |
| *C6 ສົນທິສັນຍາ (ອຸດສາຫະກຳ) ການເຮັດວຽກກາງຄືນຂອງຄົນໜຸ່ມ, 1919* |
| *C14 ສົນທິສັນຍາ (ອຸດສາຫະກຳ) ການພັກປະຈຳອາທິດ, 1921* |
| *C27 ສົນທິສັນຍາການໝາຍນໍ້າໜັກ (ສິ່ງຂອງຂົນສົ່ງໂດຍທາງກຳປັ່ນ), 1929* |
| *C29 ສົນທິສັນຍາແຮງງານທີ່ມີການບັງຄັບ, 1930* |
| *C45 ສົນທິສັນຍາການເຮັດວຽກໃຕ້ດິນ (ຜູ້ຍິງ), 1935* |
| *C80 ສົນທິສັນຍາການດັດແກ້ບັນດາມາດຕາສຸດທ້າຍ, 1946* |
| *C81 ສົນທິສັນຍາການກວດກາແຮງງານ, 1947* |
| *C100 ສົນທິສັນຍາການໃຫ້ຄ່າຈ້າງເທົ່າທຽມກັນ, 1951* |
| *C111 ສົນທິສັນຍາການຈຳແນກຄວາມແຕກຕ່າງ (ການຈ້າງງານ ແລະອາຊີບ,1958* |
| *C116 ສົນທິສັນຍາການດັດແກ້ບັນດາມາດຕາສຸດທ້າຍ, 1961* |
| *C120 ສົນທິສັນຍາສຸຂະອະນາໄມ (ການຄ້າ ແລະຫ້ອງການ), 1964* |
| *C123 ສົນທິສັນຍາອາຍຸຕໍ່າສຸດ (ວຽກໃຕ້ດິນ), 1965* |
| *C124 ສົນທິສັນຍາການກວດທາງດ້ານການແພດຂອງຄົນໜຸ່ມ (ວຽກໃຕ້ດິນ), 1965* |
| *C138 ສົນທິສັນຍາອາຍຸຕໍ່າສຸດ, 1973* |
| *C144 ສົນທິສັນຍາການປຶກສາຫາລືສາມຝ່າຍ (ມາດຕະຖານແຮງງານສາກົນ), 1976* |
| *C155 ສົນທິສັນຍາຄວາມປອດໄພທາງດ້ານອາຊີບ ແລະສຸຂະພາບ, 1981* |
| *C182 ສົນທິສັນຍາຮູບແບບການໃຊ້ແຮງງານເດັກຮ້າຍແຮງ, 1999* |
| *ສົນທິສັນຍາການຄ້າສາກົນກ່ຽວກັບຊະນິດສັດ ແລະພືດໃກ້ສູນພັນ* |
| *ສົນທິສັນຍາກ່ຽວກັບພື້ນທີ່ລຸ່ມທີ່ມີຄວາມສຳຄັນໃນສາກົນໂດຍສະເພາະ ເປັນແຫຼ່ງທີ່ຢູ່ອາໃສຂອງນົກນໍ້າ* |

© 2005 GFA Consulting Group.  All rights reserved.

| |
|---|
| *ສົນທິສັນຍາອົງການຈັດຕັ້ງແຮງງານສາກົນ (ຈີນບໍ່ໄດ້ລົງລາຍເຊັນເຕັມ)* |
| *ຂໍ້ຕົກລົງສັນຍາໄມ້ເຂດຮ້ອນຊຸ່ມສາກົນ* |
| *ສະຫະພັນສາກົນເພື່ອການປົກປ້ອງພືດແນວພັນໃໝ່*<br>*ສົນທິສັນຍາສະຫະປະຊາຊາດຕ້ານການເປັນທະເລຊາຍ* |
| *ສົນທິສັນຍາການປ່ຽນແປງດິນຟ້າອາກາດໃນກອບຂອງສະຫະປະຊາຊາດ* |
| *ສົນທິສັນຍາຊີວະນາໆພັນ* |
| *ສົນທິສັນຍາວຽນນາໃນການປົກປ້ອງຊັ້ນໂອໂຊນ* |

### *ເອກະສານຊ້ອນທ້າຍ 4: ບັນຊີຂອງຊະນິດໃກ້ຈະສູນພັນ*

*ບັນຊີຂອງສັດປ່າທີ່ຖືກຄຸກຄາມຢູ່ໃນ ສປປ ລາວ ສາມາດເບິ່ງໄດ້ຢູ່ໃນຕົວເຊື່ອມຕໍ່ໄປນີ້ຄື:*

*http://www.wcs.org/international/Asia/laos*

*http://www.iucnredlist.org*